# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

15-21 ກຸມພາ 2026
ປີທີ 15
ສະບັບທີ 1054
ລາຍສັປະດາ


## ສຳເລັດການໂຄສະນາຫາສຽງຢູ່ແຂວງຈຳປາສັກ




(ສພຊ) - ເພື່ອກະກຽມຄວາມພ້ອມໃຫ້ແກ່ວັນເລືອກຕັ້ງລະດັບຊາດທີ່ຈະມາເຖິງ, ລະຫວ່າງວັນທີ 6-19 ກຸມພາ 2026 ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ຄະນະທີ 1 ນຳໂດຍທ່ານ ສອນໄຊ ສີພັນດອນ ກຳມະການກົມ

ອ່ານຕໍ່ໜ້າ 11

## ການໂຄສະນາຫາສຽງຢູ່ 10 ຈຸດ ຂອງແຂວງຊຽງຂວາງ




(ສພຊ) - ວັນທີ 16-20 ກຸມພານີ້, ທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງແຂວງຊຽງຂວາງ ໄດ້ນຳພາຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ (ສສຊ) ຊຸດທີ X ລົງໂຄສະນາຫາສຽງ ແລະ ສະເໜີຕົວຕໍ່ຜູ້ມີສິດເລືອກຢູ່ 10 ຈຸດ ຄື: ສະໂມສອນເມືອງຄູນ, ສະໂມສອນກຸ່ມງານ, ຫ້ອງການກຸ່ມຄັງວຽງ, ສະໂມສອນເມືອງໜອກ, ຫ້ອງການບ້ານກຸ່ມສົມບູນ, ສະໂມສອນເມືອງຜາໄຊ, ສະໂມສອນເມືອງແປກ, ສະໂມສອນກຸ່ມທົ່ງໄຫບ້ານລາດງ່ອນ, ຫ້ອງປະຊຸມຫ້ອງວ່າການແຂວງ ແລະ ຫ້ອງການກຸ່ມລາດຮ້ວງ ໂດຍການຕ້ອນຮັບຂອງທ່ານ ບົວເງິນ ທຸມໄຊຍະແພງ ຮອງເລ

ອ່ານຕໍ່ໜ້າ 11



ແນວຄິດປະທານ
## ໄກສອນ ພົມວິຫານ
### ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ມາໃນສູ່ມື້ນີ້ ການເສີມຂະຫຍາຍມູນເຊື້ອສາມັກຄີປອງດອງຄົນລາວທັງຊາດ, ເອົາປະຊາຊົນເປັນກົກນັ້ນ ຍັງເປັນກຳລັງດັນອັນແຂງແຮງຕັດສິນໄຊຊະນະຂອງພາລະກິດປ່ຽນແປງໃໝ່ກໍຄືໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 347-348)

ຍິ່ງກວ່າເວລາໃດໝົດ ພັກເຮົາຕ້ອງນຳພາປະຊາຊົນເຜົ່າຕ່າງໆ ປັບປຸງ ແລະ ເພີ່ມທະວີມານະຈິດແຫ່ງຄວາມສາມັກຄີປອງດອງຢ່າງບໍ່ຢຸດຢັ້ງ, ຖືປະຊາຊົນເຜົ່າຕ່າງໆ ເປັນອ້າຍເອື້ອຍນ້ອງຮ່ວມເຮືອນດຽວກັນ. ຄົນລາວບໍ່ວ່າຈະຢູ່ພາຍໃນ ຫຼື ຕ່າງປະເທດແມ່ນລ້ວນແຕ່ມີປິຕຸພູມອັນດຽວກັນ. ນັ້ນແມ່ນສັດຈະທຳ, ແມ່ນບັນຫາຍຸດທະສາດອັນເປັນຕາຍຂອງການປະຕິບັດເຮົາ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 348)

ອ່ານຕໍ່ສະບັບໜ້າ

## ໂຄສະນາຫາສຽງຢູ່ເມືອງທຸລະຄົມ ແລະ ເມືອງແກ້ວອຸດົມ




ອ່ານຕໍ່ໜ້າ 12

## ຜູ້ສະໝັກຮັບເລືອກຕັ້ງເປັນຜູ້ແທນຢູ່ແຂວງສະຫວັນນະເຂດສຳເລັດການໂຄສະນາຫາສຽງ



ອ່ານຕໍ່ໜ້າ 8

## ລາຍງານການລົງຊຸກຍູ້ວຽກງານເລືອກຕັ້ງຢູ່ສູນກາງ-ທ້ອງຖິ່ນ



(ສພຊ) - ວັນທີ 18 ກຸມພາຜ່ານມາທີ່ຫໍສະພາແຫ່ງຊາດ ໄດ້ມີກອງປະຊຸມເພື່ອຮັບຟັງລາຍງານຜົນການລົງຕິດຕາມ, ຊຸກຍູ້ວຽກງານໂຄສະນາ ແລະ ປຸກລະດົມຂະບວນການການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ພາຍໃຕ້ການເປັນປະທານຂອງທ່ານສຈ.ປອ.

ອ່ານຕໍ່ໜ້າ 11

## ຄລຊ ຊຸກຍູ້ວຽກງານເລືອກຕັ້ງຢູ່ແຂວງຫຼວງພະບາງ

(ສພຊ) - ເພື່ອຮັບປະກັນໃຫ້ແກ່ການກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃຫ້ໄດ້ຮັບຜົນດີ, ມີຜົນສຳເລັດຕາມລະດັບຄາດໝາຍ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ນິຕິກຳຂອງຄະນະກຳມະການເລືອກ

ອ່ານຕໍ່ໜ້າ 8





ອາຫານເສີມ...

(ໜ້າ 9)



BNP ໄດ້ຮັບ 211...

(ໜ້າ 10)




ຈັບມືກັບຕຳ...

(ໜ້າ 12)

**ຂໍ່ານັບຮັບຕ້ອນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V**

# ຕິດຕາມ, ຊຸກຍູ້ ວຽກງານອະນຸກຳມະການເລຂານຸການ ຢູ່ 2 ແຂວງ



(ສພຊ) - ລະຫວ່າງວັນທີ17-19ກຸມພາຜ່ານມາ, ທ່ານ ຄຳແພງ ວິລະພັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ, ຮອງຫົວໜ້າອະນຸກຳມະການເລຂານຸການ (ອລຂ) ຂອງຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມ, ຊຸກຍູ້ວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຢູ່ແຂວງບໍລິຄຳໄຊ ແລະ ແຂວງໄຊສົມບູນ ຕາມລຳດັບ ເຊິ່ງໄດ້ຈັດກອງປະຊຸມທີ່ສະພາປະຊາຊົນແຂວງ (ສພຂ) ໂດຍມີບັນດາຕາງໜ້າອະນຸກຳມະການຕ່າງໆ ແລະ ກອງເລຂາຊ່ວຍວຽກຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ-ຂັ້ນເມືອງເຂົ້າຮ່ວມຢ່າງພ້ອມພຽງ.

ທີ່ແຂວງບໍລິຄຳໄຊ, ຜູ້ຕາງໜ້າ ອລຂ ລາຍງານໃຫ້ຮູ້ວ່າ: ໄດ້ຈັດຕັ້ງຜັນຂະຫຍາຍບັນດານິຕິກຳຂອງຄະນະກຳມະການເລືອກຕັ້ງລະດັບຊາດ ມາເປັນຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ເປັນຕົ້ນ: ມະຕິ, ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ແຜນດຳເນີນງານ ໄດ້ຈຳນວນ 20 ກວ່າສະບັບ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຂອງບັນດາອະນຸກຳມະການເລືອກຕັ້ງຂັ້ນແຂວງ ແລະ ຂັ້ນເມືອງ, ນຳພາ-ຊີ້ນຳການກະກຽມຈັດຕັ້ງໜ່ວຍປ່ອນບັດ ໂດຍຖືເອົາບ້ານ, ກົມກອງໃນກຳລັງປະກອບອາວຸດ ເປັນຫົວໜ່ວຍປ່ອນບັດ ແລະ ຂຶ້ນບັນຊີຜູ້ມີສິດເລືອກຕັ້ງຕາມລະບຽບການ ເຊິ່ງທົ່ວແຂວງມີ 208 ໜ່ວຍປ່ອນບັດ, ມີປະຊາກອນ 328,779 ຄົນ, ຜູ້ມີສິດປ່ອນບັດ (ຕາມສຳມະໂນຄົວ 215,335 ຄົນ) ໃນນີ້ ໄປປ່ອນບັດຢູ່ທ້ອງຖິ່ນອື່ນ26,835ຄົນ, ມາຈາກທ້ອງຖິ່ນອື່ນ 3,942 ຄົນ, ສະຫຼຸບແລ້ວ ຜູ້ມີສິດປ່ອນບັດຕົວຈິງ 183,250 ຄົນ ຍິງ 88,529 ຄົນ.

ທີ່ແຂວງໄຊສົມບູນ, ຜູ້ຕາງໜ້າ ອລຂ ລາຍງານໃຫ້ຮູ້ວ່າ: ພາຍຫຼັງໄດ້ຮັບມະຕິເລກທີ 26 ຂອງກົມການເມືອງສູນກາງພັກ, ຄະນະປະຈຳສະພາປະຊາຊົນແຂວງ ໄດ້ອອກມະຕິຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນແຂວງ, ມະຕິຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງ 5 ເມືອງທົ່ວແຂວງ ເພື່ອຮັບໃຊ້ການເລືອກຕັ້ງ; ໄດ້ກຳນົດບັນດາໜ້າວຽກຕ່າງໆອອກເປັນ 4 ບາດກ້າວ ຄື: 1) ກະກຽມບັນດາເອກະສານພື້ນຖານຕ່າງໆເພື່ອຮັບໃຊ້ການເລືອກຕັ້ງ, 2) ຜັນຂະຫຍາຍບາດກ້າວທີ 1 ແລະ ບັນດານິຕິກຳຂອງ ຄລຊ ລົງໄປຫາຄະນະກຳມະການເລືອກຕັ້ງຂັ້ນເມືອງ, 3) ເປັນບາດກ້າວຜັນຂະຫຍາຍວຽກງານຕ່າງໆໃນບາດກ້າວທີ2ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດຢູ່ຂັ້ນເມືອງ ແລະ 4) ພາຍຫຼັງວັນເລືອກຕັ້ງ ແລະ ກະກຽມກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຊຸດທີ V; ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ, ໄດ້ສຳເລັດບາດກ້າວທີ 1, ທີ 2 ແລະ ທີ 3 ຈຳນວນໜຶ່ງ ພ້ອມທັງດຳເນີນການຈັດຕັ້ງປະຕິບັດບາງໜ້າວຽກໃນບາດກ້າວທີ 3 ແລະ ແຜນການຈັດຕັ້ງປະຕິບັດບາດກ້າວທີ 4. ຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງທົ່ວແຂວງໄຊສົມບູນ ມີ 58,363 ຄົນ ຍິງ 28,337 ຄົນ ມີ 114 ໜ່ວຍປ່ອນບັດ ແລະ 13 ຖົງເຄື່ອນທີ່.

ໂອກາດນີ້, ທ່ານ ຄຳແພງ ວິລະພັນ ມີຄຳເຫັນໃຫ້ອະນຸກຳມະການເລຂານຸການ ເອົາໃຈໃສ່ໃນການປະສານງານ ແລະ ເກັບກຳຂໍ້ມູນໃຫ້ມີຄວາມຊັດເຈນ, ໂປ່ງໃສ; ເພີ່ມທະວີຄວາມຮັບຜິດຊອບການເມືອງຂອງຕົນ ໃນການນຳພາ-ຊີ້ນຳວຽກງານເລືອກຕັ້ງໃຫ້ມີປະສິດທິຜົນ ພ້ອມທັງໂຄສະນາເຜີຍແຜ່ຢ່າງທົ່ວເຖິງ ເພື່ອໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນແຂວງ ເຂົ້າໃຈເຖິງສິດ ແລະ ພັນທະຂອງຕົນ ທັງຮັກສາໄດ້ຄວາມສະຫງົບ, ຮັບປະກັນຄວາມປອດໄພ 100% ໃນທຸກຂັ້ນຕອນ ຈົນເຖິງມື້ປິດໜ່ວຍປ່ອນບັດ.

**(ນາງ ກຸກກິກ ບຸດດາໄຊ)**



# ອະນຸກຳມະການເລຂານຸການ ຊຸກຍູ້ ວຽກງານເລືອກຕັ້ງຢູ່ແຂວງວຽງຈັນ



(ສພຊ) - ທ່ານ ນາງ ມະນີວັນ ເຍຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ກຳມະການອະນຸກຳມະການເລຂານຸການ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ(ຄລຊ) ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວເຮັດວຽກຮ່ວມກັບອະນຸເລຂານຸການຂອງຄະນະກຳມະການເລືອກຕັ້ງແຂວງ (ຄລຂ) ວຽງຈັນ ໃນວັນທີ 17 ກຸມພານີ້ ທີ່ສະພາປະຊາຊົນແຂວງວຽງຈັນ ເພື່ອກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ຊຸດທີ X ແລະ ສະພາປະຊາຊົນແຂວງວຽງຈັນ ຊຸດທີ V.

ທ່ານນາງມະນີວັນເຍຍປາວເຮີໃຫ້ຮູ້ວ່າ: ການລົງເຄື່ອນໄຫວຄັ້ງນີ້, ກໍເພື່ອເກັບກຳສະພາບຕົວຈິງ ແລະ ຂໍ້ມູນຕ່າງໆໃນການຈັດຕັ້ງຜັນຂະຫຍາຍບັນດາມະຕິ, ຂໍ້ຕົກລົງ ແລະ ຄຳແນະນຳຕ່າງໆ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ, ການກະກຽມຄວາມພ້ອມຮອບດ້ານ ເປັນຕົ້ນ: ການເກັບກຳຂໍ້ມູນກ່ຽວກັບຜູ້ມີສິດເລືອກຕັ້ງ, ໜ່ວຍປ່ອນບັດເລືອກຕັ້ງ, ການຕິດປ້າຍຄຳຂວັນຕ່າງໆ, ການຈັດພິມຮູບ-ປະຫວັດຫຍໍ້ ແລະ ເອກະສານຕ່າງໆ ເພື່ອຮັບປະກັນໃຫ້ການເລືອກຕັ້ງຢູ່ແຂວງວຽງຈັນບັນລຸຕາມລະດັບຄາດໝາຍ ກໍຄືນຳພາຜູ້ມີສິດເລືອກຕັ້ງ ໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ 100%, ນຳພາຜູ້ມີສິດເລືອກຕັ້ງໃຫ້ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງ ຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພ 100%, ນຳພາວຽກງານປ່ອນບັດເລືອກຕັ້ງ ໃຫ້ຮັບປະກັນຄວາມໂປ່ງໃສແລະສຳເລັດທັນຕາມກຳນົດເວລາ 100%.

ທ່ານ ບົວຄຳ ຫຼວງອາໄພ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນຂອງສະພາປະຊາຊົນແຂວງວຽງຈັນ ທັງເປັນຄະນະກຳມະການເລືອກຕັ້ງແຂວງວຽງຈັນ ໄດ້ລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານການເລືອກຕັ້ງຢູ່ແຂວງວຽງຈັນ ເຊິ່ງປັດຈຸບັນ ແມ່ນສຳເລັດແລ້ວຫຼາຍໜ້າວຽກ ເປັນຕົ້ນ: ສຳເລັດການເກັບກຳສະຖິຕິຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງຕາມສຳມະໂນຄົວ 302,420 ຄົນ ຍິງ 145,862 ຄົນ, ຜົນລະເມືອງ 514,471 ຄົນ ຍິງ 246,764 ຄົນ, ຜູ້ມີສິດປ່ອນບັດຕົວຈິງ 277,228 ຄົນ ຍິງ 133,114 ຄົນ; ສຳເລັດການຈັດພິມຮູບ ແລະ ປະຫວັດຂອງຜູ້ສະໝັກເລືອກຕັ້ງ ແລະ ແຈກຢາຍໃຫ້ແຕ່ລະເຂດເລືອກຕັ້ງເມືອງ; ສຳເລັດການຈັດພິມບັດລົງຄະແນນສຽງ; ສຳເລັດການລົງຊຸກຍູ້ ແລະ ປຸກລະດົມຂະບວນການຕ່າງໆ. ເຖິງແມ່ນວ່າການຜັນຂະຫຍາຍນິຕິກຳຂອງ ຄລຊ ເປັນນິຕິກຳຂອງທ້ອງຖິ່ນໄດ້ຢ່າງຄົບຖ້ວນກໍຕາມ, ແຕ່ຖ້າທຽບໃສ່ການຈັດຕັ້ງປະຕິບັດວຽກງານເລືອກຕັ້ງໃນແຕ່ລະບາດກ້າວ ເຫັນວ່າບາງວຽກຍັງຊັກຊ້າ, ການປະສານງານລະຫວ່າງ ຄລຂ ກັບຄະນະກຳມະການເລືອກຕັ້ງຂັ້ນເມືອງ ຍັງບໍ່ທັນໄລ່ລຽນເທົ່າທີ່ຄວນ, ການເກັບກຳສະຖິຕິຈຳນວນພົນລະເມືອງ, ຜູ້ມີສິດປ່ອນບັດເລືອກຕັ້ງ ແລະ ໜ່ວຍປ່ອນບັດເລືອກຕັ້ງ ໃນທົ່ວແຂວງ ຍັງມີບາງເມືອງມີຄວາມຊັກຊ້າ.

**(ຄັດຈາກເພຈ: ປະເທດລາວ Pathedlao)**

# ເຝິກອົບຮົມມາດຕະການທາງກົດໝາຍຕ້ານການນຳໃຊ້ AI ເຂົ້າໃນເປົ້າໝາຍລັດທິກໍ່ການຮ້າຍ ແລະ ໃຊ້ຄວາມຮຸນແຮງ



(ສພຊ) - ລະຫວ່າງວັນທີ 11-13 ກຸມພາ 2026 ທ່ານ ປອ. ໄຊບັນດິດ ຣາຊະພົນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ, ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມເຝິກອົບຮົມລັດຖະສະພາກ່ຽວກັບ"ມາດຕະການທາງດ້ານກົດໝາຍ ແລະ ນະໂຍບາຍ ເພື່ອປ້ອງກັນ ແລະ ຕ້ານການນຳໃຊ້ປັນຍາປະດິດ ແລະ ເຕັກໂນໂລຊີແບບໃໝ່ ເຂົ້າໃນເປົ້າໝາຍລັດທິກໍ່ການຮ້າຍ ແລະ ລັດທິໃຊ້ຄວາມຮຸນແຮງ" (Parliamentary Training Course on "Legislative and Policy Measures to

ອ່ານຕໍ່ໜ້າ 7

# ອະນຸກຳມະການເລຂານຸການ ຕິດຕາມ ກວດກາວຽກງານເລືອກຕັ້ງຢູ່ຫຼວງພະບາງ



(ສພຊ)-ວັນທີ 17-18 ກຸມພານີ້, ທ່ານ ນາງ ທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ, ກຳມະການອະນຸກຳມະການເລຂານຸການ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາວຽກງານຮອບດ້ານບັນຍາກາດການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ Xແລະສະພາປະຊາຊົນຂັ້ນແຂວງ ຊຸດທີ V ຢູ່ແຂວງຫຼວງພະບາງ ເພື່ອເກັບກຳບັນດາຄຳຄິດເຫັນ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ຂອງອະນຸກຳມະການເລຂານຸການຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ຕາມມະຕິ, ຂໍ້ຕົກລົງ, ຄຳແນະນຳແລະແຈ້ງການ ຂອງຂັ້ນເທິງ.

ທ່ານ ປອ. ຄຳພຸຍ ຈັນທະວະດີ ຮອງຫົວໜ້າຄະນະຈັດຕັ້ງແຂວງ ໄດ້ລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານກະກຽມໃຫ້ແກ່ການເລືອກຕັ້ງຢູ່ແຂວງຫຼວງພະບາງ ເຊິ່ງໄລຍະຜ່ານມາ ໄດ້ສຳເລັດການຮ່າງລາຍຊື່ເປົ້າໝາຍບຸກຄະລາກອນເພື່ອສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ (ສສຂ) ຫຼວງພະບາງ ຊຸດທີ V ປະກອບມີ 84 ທ່ານ, ຍິງ 20 ທ່ານ ເພື່ອເລືອກເອົາ 60 ທ່ານ; ສຳເລັດການສັງລວມຜູ້ມີສິດປ່ອນບັດ, ໜ່ວຍປ່ອນບັດ ແລະ ເກັບກຳສະຖິຕິພົນລະເມືອງຂອງແຂວງ ເຊິ່ງຜູ້ມີສິດປ່ອນບັດທີ່ມີໜ້າຕົວຈິງ 261,004 ຄົນ, ຍິງ 129,461 ຄົນ. ການໂຄສະນາຫາສຽງຂອງຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສສຂ ຢູ່ແຂວງຫຼວງພະບາງ, ມາຮອດປັດຈຸບັນ ໄດ້ສຳເລັດການລົງໂຄສະນາຫາສຽງຢູ່ບັນດາເມືອງ ແລະ ນະຄອນ ເຊິ່ງຜູ້ສະໝັກຮັບເລືອກຕັ້ງເປັນສສຊ ໄດ້ກຳນົດຢູ່ເມືອງລະ 2 ຈຸດ ໃນ 11 ເມືອງ ແລະ 1 ນະຄອນ; ສຳລັບຜູ້ສະໝັກຮັບເລືອກຕັ້ງເປັນ ສສຂ ແມ່ນກຳນົດ 5 ຈຸດຂຶ້ນໄປ ຕາມເງື່ອນໄຂຕົວຈິງຂອງບັນດາເມືອງ ແລະ ນະຄອນ.

ຈາກນັ້ນ, ໄດ້ມີການແລກປ່ຽນສົນທະນາບັນຫາຕ່າງໆເປັນຕົ້ນແມ່ນຂໍ້ສະດວກ, ຂໍ້ຫຍຸ້ງຍາກທີ່ຕິດພັນກັບວຽກງານກະກຽມ ແລະ ດຳເນີນການເລືອກຕັ້ງຂອງແຕ່ລະເມືອງ ເພື່ອຮັບປະກັນຄວາມພ້ອມຮອບດ້ານໃຫ້ແກ່ການເລືອກຕັ້ງຄັ້ງນີ້ ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ພ້ອມທັງເກັບກຳຄຳສະເໜີ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ແລະ ລົງກວດກາຕົວຈິງບັນຍາກາດ ແລະ ສະຖານທີ່ປ່ອນບັດເລືອກຕັ້ງຢູ່ເມືອງຈອມເພັດແລະເມືອງນານ ໃນການຈັດຕັ້ງປະຕິບັດຕາມມະຕິ, ຂໍ້ຕົກລົງ, ຄຳແນະນຳແລະແຈ້ງການຂອງຂັ້ນເທິງເພື່ອລາຍງານຄະນະກຳມະການເລືອກຕັ້ງລະດັບຊາດ.

**(ນາງ ອານິຕາ ມ່ວນສະຫວັດ)**

# ສຳເລັດການກະກຽມການເລືອກຕັ້ງຢູ່ແຂວງອັດຕະປື




(ສພຊ)-ວັນທີ 19 ກຸມພານີ້ ທີ່ສະພາປະຊາຊົນແຂວງອັດຕະປື ໄດ້ມີກອງປະຊຸມລາຍງານກ່ຽວກັບຜົນສຳເລັດຂອງການເຄື່ອນໄຫວວຽກງານກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຢູ່ແຂວງອັດຕະປື ໂດຍການເປັນປະທານຂອງທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການຕ່າງປະເທດ, ກຳມະການອະນຸກຳມະການເລຂານຸການຂອງຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ) ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ລິນຄຳ ໂຮມອິນຕາ ກຳມະການພັກແຂວງ, ຫົວໜ້າຫ້ອງວ່າການແຂວງ ທັງເປັນຮອງຫົວໜ້າອະນຸກຳມະການເລຂານຸການ ຂອງຄະນະກຳມະການເລືອກຕັ້ງແຂວງ (ຄລຂ) ອັດຕະປືລາຍງານໃຫ້ຮູ້ວ່າວ່າ: ຕະຫຼອດໄລຍະເກືອບສອງເດືອນຜ່ານມາ ໄດ້ເອົາໃຈໃສ່ຄົ້ນຄວ້າພ້ອມທັງຈັດຕັ້ງຜັນຂະຫຍາຍບັນດານິຕິກຳຂອງສູນກາງ ກໍຄືຂອງຄະນະກຳມະການເລືອກຕັ້ງລະດັບຊາດເປັນນິຕິກຳເພື່ອຮັບໃຊ້ໃຫ້ແກ່ການເລືອກຕັ້ງ, ກຳນົດການຈັດຕັ້ງປະຕິບັດເປັນແຕ່ລະບາດກ້າວ ຄື: ສຳເລັດການຜັນຂະຫຍາຍເນື້ອໃນຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ບັນດາເອກະສານຂອງ ຄລຊ ເປັນນິຕິກຳ ເພື່ອຮັບໃຊ້ໃຫ້ແກ່ການເລືອກຕັ້ງ; ສຳເລັດການຈັດກອງປະຊຸມຄັ້ງປະຖົມມະລຶກຂອງ ຄລຂ, ກອງປະຊຸມເຝິກອົບຮົມສຳມະນາໃນຫົວຂໍ້ຕ່າງໆ; ສຳເລັດການສັງ ລວມສະຖິຕິໜ່ວຍປ່ອນບັດເລືອກຕັ້ງຢູ່ 5 ເມືອງ ເຊິ່ງທົ່ວແຂວງມີ 230 ໜ່ວຍປ່ອນບັດ ໃນນັ້ນ, 176 ໜ່ວຍຄົງທີ່ ແລະ 54 ໜ່ວຍເຄື່ອນທີ່; ສຳເລັດການຂຶ້ນແຜນຄວາມຕ້ອງການອຸປະກອນຮັບໃຊ້ໃຫ້ແກ່ການເລືອກຕັ້ງເປັນຕົ້ນ: ກາຈ້ຳຄະນະກຳມະການເລືອກຕັ້ງຂັ້ນເມືອງ 5 ໜ່ວຍ, ຫີບປ່ອນບັດຄົງທີ່ 176 ຄູ່ (ລວມ 352 ໜ່ວຍ ແລະ ຖົງເຄື່ອນທີ່ 110 ໜ່ວຍ, ບັດຕິດເອິກຄະນະກຳມະການເລືອກຕັ້ງຂັ້ນແຂວງ-ເມືອງ ແລະ ຄະນະຮັບຜິດຊອບ 2,719 ບັດ, ນ້ຳເບີຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ(ສສຂ) 45 ບັດ, ປ້າຍໂຄສະນາຫາສຽງ 7 ປ້າຍ ແລະ ອື່ນໆ; ສຳເລັດການຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານໃນບາດກ້າວ 1, 2 ແລະ ເຜີຍແຜ່ບັນດາເອກະສານຕົ້ນຕໍກ່ຽວກັບການເລືອກຕັ້ງ; ສຳເລັດການປະກາດຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ ໃນນັ້ນ, ສສຊ ຊຸດທີ X ຈຳນວນ 10 ທ່ານ ຍິງ 2 ທ່ານ, ສສຂ ຊຸດທີ V ຢູ່ 5 ເມືອງ, ເມືອງລະ 7 ທ່ານ ລວມ 35 ທ່ານ ຍິງ 11 ທ່ານ; ສຳເລັດການເກັບກຳສະຖິຕິພົນລະເມືອງທົ່ວແຂວງອັດຕະປື ມີ 173,799 ຄົນ ຍິງ 84,489 ຄົນ, ຜູ້ມີສິດປ່ອນບັດເລືອກຕັ້ງຕາມສຳມະໂນຄົວ 111,825 ຄົນ ຍິງ 54,675 ຄົນ, ຜູ້ມີສິດປ່ອນບັດຕົວຈິງ 106,540 ຄົນ ຍິງ 52,661 ຄົນ; ສຳເລັດການລົງຕິດຕາມ ແລະ ຊຸກຍູ້ບັນດາໜ່ວຍປ່ອນບັດເລືອກຕັ້ງຢູ່ 5 ເມືອງ ແລະ ໜ່ວຍປ່ອນບັດຢູ່ຂັ້ນບ້ານ ພ້ອມນັ້ນ, ຍັງໄດ້ສິ່ງຄຳແນະນຳກ່ຽວກັບການປ່ອນບັດໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ເພື່ອແນະນຳໃຫ້ຈັດເຝິກອົບຮົມໃຫ້ແຕ່ລະໜ່ວຍປ່ອນບັດໃນເມືອງຂອງຕົນ; ສຳເລັດການລົງໂຄສະນາຫາສຽງຢູ່ 5 ເມືອງ.

# ຊ່ຽວຊານໂຄງການໄຈກາ ພົບປະຢ້ຽມຢາມ ສພຊ




(ສພຊ)-ຕອນບ່າຍວັນທີ 16 ກຸມພາ 2026 ກົມສື່ມວນຊົນ ຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ (ສພຊ) ໄດ້ຕ້ອນຮັບ ແລະ ນຳພາທ່ານ ຮາຢາໂຕະ ຢາໂອໂອຍຕະ ຫົວໜ້າຊ່ຽວຊານໂຄງການກົດໝາຍໄຈກາ ແລະ ສຈ. ຮິໂຣຊິ ມາຊິໂອະ ພ້ອມດ້ວຍຄະນະນັກສຶກສາມະຫາວິທະຍາໄລເຄໂອ ປະເທດຍີ່ປຸ່ນ ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ.

ການມາຢ້ຽມຊົມຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດ ຊຸດທີ I ເຖິງສະພາແຫ່ງຊາດ ຊຸດປັດຈຸບັນ (ຊຸດທີ IX) ແລະ ໄດ້ມອບປຶ້ມທີ່ລະນຶກຈາກ ສພຊ; ຈາກນັ້ນ, ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ອີກດ້ວຍ.

ຫຼັງຈາກນັ້ນ, ຄະນະຜູ້ແທນດັ່ງກ່າວ ນຳໂດຍທ່ານ ຮາຢາໂຕະ ຢາໂອໂອຍຕະ ໄດ້ພົບປະແລກປ່ຽນບົດຮຽນກັບທ່ານ ນາງ ນິດແກ້ວ ຄຳມີ ຮອງຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ, ກຳມາທິການການຕ່າງປະເທດ ແລະ ຄະນະ.

ທ່ານ ນາງ ນິດແກ້ວ ຄຳມີ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບແລະຕີລາຄາສູງຕໍ່ການຢ້ຽມຢາມ ແລະ ພົບປະກັນໃນຄັ້ງນີ້ ເປັນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີທີ່ມີມາແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ໃຫ້ໄດ້ຮັບການພັດທະນາຍິ່ງຂຶ້ນເຊິ່ງໃນປີ 2025 ຜ່ານມາ ແມ່ນຄົບຮອບ 70 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ (1955-2025) ແລະ ຄົບຮອບ 10 ປີແຫ່ງການເປັນຄູ່ຮ່ວມຍຸດທະສາດ ໂດຍມີການຈັດກິດຈະກຳສະເຫຼີມສະຫຼອງຢ່າງຍິ່ງໃຫຍ່ໃນທັງສອງປະເທດ.

ການພົບປະຄັ້ງນີ້ ທັງສອງຝ່າຍໄດ້ແຈ້ງສະພາບພົ້ນເດັ່ນ, ການເຄື່ອນໄຫວວຽກງານ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການຕົນພ້ອມທັງແລກປ່ຽນບົດຮຽນ ແລະ ຄຳຄິດຄຳເຫັນຮ່ວມກັນຢ່າງກົງໄປກົງມາ.



# ຜົນງານພົ້ນເດັ່ນຂອງສະພາແຫ່ງຊາດ ຊຸດທີ IX (2021-2025)

**ການປະຕິບັດພາລະບົດບາດດ້ານນິຕິບັນຍັດ:**

ປີ 2025 ສະພາແຫ່ງຊາດ ໄດ້ພິຈາລະນາ, ຮັບຮອງເອົາລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປັບປຸງປີ2025 ແລະ ຮັບຮອງເອົາບັນດາກົດໝາຍ ທັງໝົດຈຳນວນ 10 ສະບັບ, ໃນນີ້:

- ກົດໝາຍສ້າງໃໝ່ 5 ສະບັບ ຄື: 1. ກົດໝາຍວ່າດ້ວຍການປູກຝັງ, 2. ກົດໝາຍວ່າດ້ວຍພະນັກງານໄອຍະການປະຊາຊົນ, 3. ກົດໝາຍວ່າດ້ວຍຄວາມປອດໄພທາງໄຊເບີ, 4. ກົດໝາຍວ່າດ້ວຍສາມັນສຶກສາ, 5. ກົດໝາຍວ່າດ້ວຍສັງຄົມສົງເຄາະ;

- ກົດໝາຍປັບປຸງ 5 ສະບັບ ຄື: 1. ກົດໝາຍວ່າດ້ວຍປ້າຍ, 2. ກົດໝາຍວ່າດ້ວຍອາກອນລາຍໄດ້, 3. ກົດໝາຍວ່າດ້ວຍຢາແລະຜະລິດຕະພັນການແພດ, 4. ກົດໝາຍວ່າດ້ວຍຊົນລະປະທານ, 5. ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ.

ສະພາແຫ່ງຊາດ ໄດ້ຄົ້ນຄວ້າໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ຈຳນວນ 8 ສະບັບ ຄື: 1. ການຮ່ວມມືດ້ານເສດຖະກິດໃນພາກພື້ນ, 2. ຄວາມປອດໄພ ແລະ ສຸຂະພາບແຮງງານ, 3. ແຜນງານສົ່ງເສີມຄວາມປອດໄພ ແລະ ສຸຂະພາບແຮງງານ, 4. ການປົກປ້ອງວັດສະດຸນິວເຄລຍທາງກາຍະພາບ, 5. ການກຳນົດຊາຍແດນປະເທດ ລະຫວ່າງ ສປປລາວ ແລະລາຊະອານາຈັກກຳປູເຈຍ, 6. ການຊ່ວຍເຫຼືອດ້ານຍຸຕິທຳໃນບັນຫາແພ່ງ ລະຫວ່າງ ສປປ ລາວ ແລະ ສສ.ຫວຽດນາມ, 7. ການຮັບຮູ້ດ້ານມາດຕະຖານຜະລິດຕະພັນຍານພາຫະນະອາຊຽນ ແລະ 8. ອະນຸສັນຍາວ່າດ້ວຍອົງການແຮງງານສາກົນ;



ການປະຕິບັດພາລະບົດບາດ ດ້ານນິຕິບັນຍັດ



ຄົ້ນຄວ້າຕີຄວາມໝາຍ ແລະ ອະທິບາຍກົດໝາຍ ໄດ້ຈຳນວນ 5 ບັນຫາຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດວາງອອກ. ນອກນັ້ນ, ຍັງໄດ້ໃຫ້ຄຳປຶກສາ, ຄຳແນະນຳແກ່ພົນລະເມືອງແລະລົງພົບປະປະຊາຊົນ, ຜູ້ມີສິດເລືອກຕັ້ງ ເພື່ອເກັບກຳ, ນຳເອົາຄຳຄິດເຫັນ, ຄຳສະເໜີ, ຄວາມມຸ່ງມາດປາຖະໜາຂອງປະຊາຊົນ ໄດ້ຈຳນວນ 1,557 ຈຸດ, ມີຜູ້ເຂົ້າຮ່ວມ 155,037 ຄົນ, ຍິງ 62,479 ຄົນ ແລະ ລະດົມການຊ່ວຍເຫຼືອດ້ານງົບປະມານ ແລະວັດຖຸເຄື່ອງໃຊ້ຕ່າງໆລວມ ເປັນມູນຄ່າທັງໝົດ 2,189,470,000 ກີບ;

**ການປະຕິບັດພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:**

ປີ 2025 ສະພາແຫ່ງຊາດ ໄດ້ຄົ້ນຄວ້າພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດຕາມລັດຖະທຳມະນູນ ແລະ ກົດໝາຍ ໂດຍຜ່ານການດຳເນີນກອງປະຊຸມສະໄໝສາມັນ, ກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ດັ່ງນີ້:

- ພິຈາລະນາ, ຮັບຮອງບັນດາວຽກງານສຳຄັນຕ່າງໆ ຢູ່ກອງປະຊຸມສະໄໝສາມັນເທື່ອທີ 9, ເທື່ອທີ 10 ແລະ ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ລວມຈຳນວນ 3 ຄັ້ງ ເຊິ່ງສາມາດພິຈາລະນາເນື້ອໃນໄດ້ຈຳນວນ 26 ຫົວຂໍ້ ແລະ ຮັບຮອງອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ທັງໝົດ 26 ສະບັບ; ອັນພົ້ນເດັ່ນ, ໄດ້ພິຈາລະນາຮັບຮອງເອົາການປັບປຸງລັດຖະທຳມະນູນແຫ່ງສປປລາວສະບັບປີ2025, ກົດໝາຍຈຳນວນໜຶ່ງ, ການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານແລະນະໂຍບາຍສົ່ງເສີມພິເສດສະເພາະໃຫ້ຜູ້ລົງທຶນໃນນິຄົມອຸດສາຫະກຳອຳມະຕະ.

- ພິຈາລະນາ, ຮັບຮອງບັນດາຫົວຂໍ້ເນື້ອໃນຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝວິສາມັນຄະນະປະຈຳສະພາແຫ່ງຊາດ 12 ຄັ້ງ ເຊິ່ງສາມາດພິຈາລະນາເນື້ອໃນໄດ້ຈຳນວນ 131 ຫົວຂໍ້ ແລະ ອອກເປັນມະຕິຂອງຄະນະປະຈຳສະພາແຫ່ງຊາດ ຈຳນວນ 91 ສະບັບ.



ການປະຕິບັດພາລະບົດບາດ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ





ການປະຕິບັດພາລະບົດບາດ ດ້ານການຕິດຕາມກວດກາ



**ການປະຕິບັດພາລະບົດບາດດ້ານການຕິດຕາມກວດກາ:**

ປີ 2025 ສະພາແຫ່ງຊາດ ໄດ້ເຄື່ອນໄຫວຕິດຕາມກວດກາຫົວຂໍ້ຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນ ໄດ້ທັງໝົດ 31 ຄັ້ງ ເຊິ່ງມີບັນດາຫົວຂໍ້ທີ່ພົວພັນກັບບັນຫາເຄັ່ງຮ້ອນ ແລະ ສິ່ງຜົນກະທົບຕໍ່ສັງຄົມ ເປັນຕົ້ນ ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ຕິດພັນກັບການປະຕິບັດສອງວາລະແຫ່ງຊາດ, ການຈັດຕັ້ງປະຕິບັດໂຄງການຂຸດຄົ້ນແຮ່ທາດ ແລະ ການຊຸກຍູ້ສົ່ງເສີມການຜະລິດຊົມໃຊ້ພາຍໃນ ເພື່ອຫຼຸດຜ່ອນການນຳເຂົ້າ, ບັນດາໂຄງການຈຸດສຸມຂອງວຽກງານພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ; ນອກນັ້ນ, ຍັງໄດ້ຕິດຕາມກວດກາຢູ່ກອງປະຊຸມສະພາແຫ່ງຊາດ ດ້ວຍການຊັກຖາມ ເພື່ອໃຫ້ກະຊວງ-ອົງການ ຊີ້ແຈງ ແລະ ກຳນົດວິທີການແກ້ໄຂ ມີຈຳນວນ 36 ຄຳຊັກຖາມ.

ສະພາແຫ່ງຊາດ ໄດ້ຮັບຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ທັງໝົດຈຳນວນ 236 ເລື່ອງ ເຊິ່ງສາມາດພິຈາລະນາແກ້ໄຂ ໄດ້ຈຳນວນ 121 ເລື່ອງ; ດຳເນີນກອງປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປຶກສາຫາລືຄຳຮ້ອງຂໍຄວາມເປັນທຳທີ່ມີຄວາມຫຍຸ້ງຍາກ ໄດ້ຈຳນວນ 7 ຄັ້ງ, ຕ້ອນຮັບ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ ຈຳນວນ 424 ເທື່ອຄັ້ງ. ນອກນັ້ນ, ຍັງໄດ້ຮັບຄຳສະເໜີຜ່ານໂທລະສັບສາຍດ່ວນກອງປະຊຸມສະພາແຫ່ງຊາດ ພ້ອມທັງສັງລວມບັນດາເນື້ອໃນສຳຄັນສົ່ງໃຫ້ກະຊວງ-ອົງການ ແລະ ພາກສ່ວນກ່ຽວຂ້ອງ ພິຈາລະນາແກ້ໄຂຕາມພາລະບົດບາດ ແລະ ແຈ້ງຕອບໃຫ້ທັນເວລາ.

**ການເຄື່ອນໄຫວວຽກງານການຕ່າງປະເທດ:**

ປີ 2025 ສະພາແຫ່ງຊາດລາວ ໄດ້ເຄື່ອນໄຫວຢ້ຽມຢາມພົບປະ ແລະ ແລກປ່ຽນບົດຮຽນກັບບັນດາລັດຖະສະພາປະເທດເພື່ອນມິດຍຸດທະສາດ ແລະ ຕ່າງປະເທດຈຳນວນ38ຄະນະ; ເຂົ້າຮ່ວມກອງປະຊຸມລັດຖະສະພາພາກພື້ນ ແລະ ສາກົນ ຈຳນວນ 24 ຄັ້ງ; ເປັນເຈົ້າພາບຈັດກອງປະຊຸມລັດຖະສະພາພາກພື້ນຢູ່ ສປປລາວ 2 ຄັ້ງ; ຕ້ອນຮັບຄະນະຜູ້ແທນຂັ້ນສູງລັດຖະສະພາຕ່າງປະເທດ, ຄະນະມິດຕະພາບລັດຖະສະພາຕ່າງໆ ລວມທັງທູຕານຸທູດ, ອົງການຈັດຕັ້ງສາກົນ ແລະ ແຂກຕ່າງປະເທດທີ່ມາຢ້ຽມຢາມພົບປະແລະເຮັດວຽກຢູ່ ສປປລາວ ທັງໝົດຈຳນວນ 40 ຄະນະ; ເຂົ້າຮ່ວມງານສະເຫຼີມສະຫຼອງວັນສຳຄັນຂອງຊາດ-ສາກົນ ຈຳນວນ 9 ຄັ້ງ.



ການເຄື່ອນໄຫວວຽກງານການຕ່າງປະເທດ



# ຄະນະກຳມະການເລືອກຕັ້ງແຂວງໄຊຍະບູລີ ສະຫຼຸບຖອດຖອນບົດຮຽນວຽກງານເລືອກຕັ້ງ



(ສພຂ)-ວັນທີ 14 ມັງກອນ ຜ່ານມານີ້, ຄະນະກຳມະການເລືອກຕັ້ງຂັ້ນແຂວງໄຊຍະບູລີ ໄດ້ເປີດກອງປະຊຸມສະຫຼຸບຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານເລືອກຕັ້ງ ໃນບາດກ້າວທີ 1, ທີ 2 ແລະ ວາງແຜນການຈັດຕັ້ງປະຕິບັດບາດກ້າວທີ 3; ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ ໂດຍການເປັນປະທານຂອງທ່ານ ເພັງ ນິລັນ ຄຳພັນເພັງ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງ, ປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ມີບັນດາທ່ານ ຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຫົວໜ້າ, ຮອງຫົວໜ້າ ອະນຸກຳມະການ ແລະ ວິຊາການຊ່ວຍວຽກເຂົ້າຮ່ວມ

ກອງປະຊຸມໄດ້ຜ່ານບົດສະຫຼຸບການຈັດຕັ້ງປະຕິບັດບາດກ້າວທີ 1, ທີ 2 ແລະ ວາງແຜນການການຈັດຕັ້ງປະຕິບັດບາດກ້າວທີ3; ບົດລາຍງານຜົນການສັງລວມບັນດາສະຖິຕິ ຮັບໃຊ້ໃຫ້ແກ່ວຽກງານເລືອກຕັ້ງ; ບົດລາຍງານການກະກຽມວຽກງານໂຄງປະກອບ ແລະ ບຸກຄະລາກອນ. ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມປະຊຸມໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳ ເຫັນໃສ່ເນື້ອເອກະສານທີ່ນຳມາຜ່ານຄັ້ງນີ້. ຫຼັງຈາກນັ້ນ, ທ່ານ ເພັງ ນິລັນ ຄຳພັນເພັງ ໄດ້ມີຄຳຖາມເຈາະຈີ້ມ ພ້ອມທັງໃຫ້ທິດຊີ້ນຳເພື່ອເຮັດໃຫ້ການຈັດຕັ້ງປະຕິບັດບາດກ້າວທີ 3 ມີຜົນສຳເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ກຳນົດໄວ້.

# ເຝິກອົບຮົມວຽກງານເລືອກຕັ້ງ ໃຫ້ແກ່ພະນັກງານຫຼັກແຫຼ່ງອ້ອມຂ້າງແຂວງວຽງຈັນ




(ສພຂ) - ວັນທີ 14 ມັງກອນ ຜ່ານມາ ທີ່ສະໂມສອນແຂວງວຽງຈັນ, ໄດ້ມີການເຝິກອົບຮົມເພື່ອກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໂດຍການເຂົ້າຮ່ວມຂອງ ທ່ານ ພູທະນູເຜັດ ໄຊສົມບັດ ກຳມະການສູນກາງພັກ, ເລຂາຄະນະພັກແຂວງແລະທ່ານບຸນສອນເຜັດລາວັນ ປະທານສະພາປະຊາຊົນແຂວງ ພ້ອມດ້ວຍບັນດາທ່ານໃນຄະນະກຳມະການເລືອກຕັ້ງຂັ້ນແຂວງແລະພະນັກງານ-ລັດຖະກອນ ເຂົ້າຮ່ວມ.

ທ່ານ ບຸນສອນ ເຜັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ກ່າວວ່າ: ການເຝິກອົບຮົມເພື່ອກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີX ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ)ຊຸດທີ V ຈັດຂຶ້ນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດພວມສະເຫຼີມສະຫຼອງຜົນສຳເລັດກອງປະຊຸມໃຫຍ່ຄັ້ງທີXII ຂອງພັກ, ຄຽງຄູ່ກັບການກະກຽມສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 77 ປີ ແລະກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການເລືອກຕັ້ງ(ສສຊ) ຊຸດທີ X ແລະ (ສສຂ) ຊຸດທີ V ທີ່ຈະມີຂຶ້ນໃນທ້າຍເດືອນກຸມພາ ປີ 2026 ນີ້. ໂດຍປະຕິບັດຕາມກົດໝາຍວ່າດ້ວຍການເລືອກຕັ້ງ ສສຊແລະສສຂ, ມະຕິກົມການເມືອງສູນກາງພັກວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V, ແຜນດຳເນີນຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ; ສະນັ້ນ, ໃນການເຝິກອົບຮົມຄັ້ງນີ້ ໄດ້ເຊື່ອມຊຶມ ແລະ ຮັບຟັງການເຜີຍແຜ່ເອກະສານສຳຄັນ ດັ່ງນີ້: ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ ຂອງກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V; ເພີ່ມທະວີການນຳພາແນວຄິດ, ເສີມຂະຫຍາຍສິດປະຊາທິປະໄຕ ຂອງປະຊາຊົນລາວບັນດາເຜົ່າ ເພື່ອການເລືອກຕັ້ງ; ຄຳແນະນຳ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ສະບັບເລກທີ 15/ຄລຊ, ລົງວັນທີ 30/12/2025 ກ່ຽວກັບການກະກຽມໂຄງປະກອບບຸກຄະລາກອນ ຂອງ ສສຊ ຊຸດທີX ແລະ ສສຂ ຊຸດທີV; ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານ ຂອງຄະນະກຳມະການເລືອກຕັ້ງແຂວງວຽງຈັນ ເຜີຍແຜ່ໂດຍການນຳແລະຄະນະກຳມະການເລືອກຕັ້ງຂັ້ນແຂວງ.

ທ່ານ ພູທະນູ ເຜັດໄຊສົມບັດ ກຳມະການສູນກາງພັກ, ເລຂາຄະນະພັກແຂວງ ກ່າວວ່າ: ການເຝິກອົບຮົມຄັ້ງນີ້ ມີຄວາມສຳຄັນຫຼາຍ ແລະ ເພື່ອເຮັດໃຫ້ບັນດາເອກະສານດັ່ງກ່າວໄດ້ຮັບການຈັດຕັ້ງຜັນຂະຫຍາຍ, ແນະນຳເຜີຍແຜ່ ແລະ ດຳເນີນການເລືອກຕັ້ງໃຫ້ຖືກຕ້ອງຕາມກົດໝາຍ, ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ, ເປັນການສຶກສາອົບຮົມການເມືອງ-ແນວຄິດ ແລະ ປຸກລະດົມເສີມຂະຫຍາຍຈິດໃຈຮັກຊາດ, ເສີມຂະຫຍາຍສິດປະຊາທິປະໄຕໃນການເລືອກຕັ້ງ, ຍົກສູງສະຕິຊາດ, ມີຄວາມເປັນເອກະພາບ ແລະ ສາມັກຄີປອງດອງຊາດ, ມີສະຕິລະວັງຕົວ, ເປັນເຈົ້າການຕອບຕ້ານກົນອຸບາຍ ຂອງພວກອິດທິກຳລັງປໍລະປັກທີ່ຫວັງມ້າງເພທຳລາຍລະບອບໃໝ່ຂອງພວກເຮົາແລະຮັບປະກັນໃຫ້ການກະກຽມ ແລະ ດຳເນີນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ມີຜົນສຳເລັດ ຄື: ຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງໄປປ່ອນບັດເລືອກຕັ້ງ ໃຫ້ຄົບຖ້ວນ 100%, ຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງຮູ້ສຶດໃນການປ່ອນບັດເລືອກຕັ້ງ ຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະຄວາມປອດໄພໃນວັນເລືອກຕັ້ງ 100%, ຮັບປະກັນການປ່ອນບັດເລືອກຕັ້ງໃຫ້ມີຄວາມໂປ່ງໃສ ແລະ ສຳເລັດຕາມກຳນົດເວລາ 100%.

**(ບຸລາຕີ ແສນທະວົງ)**



# ເປີດງານມິທັດສະການທ່ຽວຊົມດອກຄາຍປ່າ ປະຈຳປີ 2026




(ສພຂ) - ວັນທີ 8 ມັງກອນຜ່ານມາ, ໄດ້ມີພິທີເປີດງານມິທັດສະການທ່ຽວຊົມດອກຄາຍປ່າ ປະຈຳປີ 2026 ທີ່ສວນສາທາລະນະຫົວພັນ-ແຫັງຮວ່າ ໂດຍການເຂົ້າຮ່ວມຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງຫົວພັນ ແລະ ທ່ານ ບຸນລົມ ສີເມືອງວົງ ຮອງເລຂາຄະນະບໍລິຫານງານພັກເມືອງຊຳເໜືອ, ປະທານຄະນະກຳມະການປົກຄອງເມືອງຊຳເໜືອ, ມີບັນດາທ່ານການນຳແຂວງ, ການນຳເມືອງຊຳເໜືອ, ຫົວໜ້າພະແນກການອ້ອມຂ້າງແຂວງ, ເມືອງຊຳເໜືອ, ນາຍ-ພົນທະຫານ, ນາຍ-ພົນຕຳຫຼວດ, ພະນັກງານ-ລັດຖະກອນ ແລະແຂກຖືກເຊີນເຂົ້າຮ່ວມ.

ທ່ານ ນ. ຄຳພອນ ສົມບູນ ຮອງປະທານຄະນະກຳມະການປົກຄອງເມືອງຊຳເໜືອ ກ່າວວ່າ: ເມືອງຊຳເໜືອເປັນເມືອງທີ່ມີທີ່ຕັ້ງສຳຄັນທາງປະຫັວດສາດ, ເປັນຖິ່ນກຳເນີດຂອງ ສປປລາວ, ເປັນບ່ອນທີ່ມີທີ່ຕັ້ງພູມສັນຖານຖືເປັນເມືອງ, ແຂວງພູດອຍທີ່ມີອາກາດໜາວເຢັນ, ມີຄວາມອຸດົມສົມບູນທາງທຳມະຊາດ, ມີພູຜາປ່າໄມ້ຂຽວສົດງົດງາມຕະຫຼອດປີ. ນັບແຕ່ປີ 2021 ທີ່ແຂວງຫົວພັນໄດ້ຈັດງານມິທັດສະການຊົມດອກຄາຍປ່າເປັນຕົ້ນມາ, ເຫັນໄດ້ວ່າດອກຄາຍປ່າໄດ້ກາຍເປັນທີ່ຈົດຈຳ ຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ, ກາຍເປັນເອກະລັກຂອງເມືອງໜາວ ກໍຄືເມືອງຊຳເໜືອ, ແຂວງຫົວພັນ. ເມື່ອເຫັນໄດ້ທ່າແຮງ ແລະ ຄວາມສຳຄັນດັ່ງກ່າວ, ມາຮອດປີ 2022 ພະແນກ ຖວທ ແຂວງຫົວພັນໄດ້ສະເໜີທາການນຳແຂວງ ແລະ ສະເໜີສະພາປະຊາຊົນແຂວງຮັບຮອງເອົາດອກຄາຍປ່າເປັນເອກະລັກຂອງແຂວງຫົວພັນ ທີ່ມີສີສັນສວຍງາມໂດດເດັ່ນ, ມີຄວາມເປັນເອກະລັກສະເພາະ, ງົດງາມພິເສດມີສີບົວອ່ອນ ແລະ ເຂັ້ມ ມີລັກສະນະຄ້າຍຄືດອກຊາກຸຣະດອກໄມ້ປະຈຳຊາດຍີ່ປຸ່ນ, ເຊິ່ງພົບເຫັນຫຼາຍ

ກ່າວໝູ່ແມ່ນຢູ່ເມືອງຊຳເໜືອ, ເມືອງວຽງໄຊແລະເມືອງຫົວເມືອງຕາມເສັ້ນທາງເຂົ້າໄປສວນອຸທິຍານຫີນຕັ້ງ.

ແຕ່ລະປີດອກຄາຍປ່າຈະອອກດອກເບັ່ງບານສວຍງາມທີ່ສຸດໃນລະຫວ່າງເດືອນ 12-1 ຂອງທຸກໆປີແມ່ນຈະອອກດອກໃນລະດູໜາວ. ດັ່ງນັ້ນ, ເພື່ອເປັນການອານຸລັກຮັກສາດອກຄາຍປ່າເຮັດໃຫ້ການທ່ຽວຊົມດອກຄາຍປ່າມີບັນຍາກາດຟົດຟື້ນຂຶ້ນກວ່າເກົ່າ ເມືອງຊຳເໜືອ ຈຶ່ງໄດ້ຈັດງານມິທັດສະການຊົມດອກຄາຍປ່າ ປະຈຳປີ 2026 ຂຶ້ນຢ່າງເປັນທາງການ, ໂດຍມີ 3 ກິດຈະກຳຄື: ຈັດງານປະກວດນາງສາວດອກຄາຍປ່າ, ງານວາງສະແດງສິນຄ້າໂອດ້ອບ, ຈັດງານມິທັດສະການດອກຄາຍປ່າຢູ່ສວນສາທາລະນະຫົວພັນ-ກວາງນິງ.

**(ສີອຳພອນ)**

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 10 ໃຫ້ແກ່ພະນັກງານຫຼັກແຫຼ່ງ



(ສພຂ) - ວັນທີ 8 ມັງກອນຜ່ານມາ ທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ11 ພ້ອມຄະນະໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ10ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ IV ທີ່ສະໂມສອນແຂວງບໍລິຄຳໄຊ, ການເຊື່ອມຊຶມເອກະສານກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ(ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ(ສສຂ)ຊຸດທີ V ມີບັນດາທ່ານພະນັກງານການນຳຫຼັກແຫຼ່ງ, ຫົວໜ້າ, ຮອງຫົວພະແນກ, ຫົວໜ້າ, ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ວິຊາການ ພາຍໃນແຂວງ ເຂົ້າຮ່ວມຮັບຟັງ.

ໃນການເຄື່ອນໄຫວ, ສສຊ ແລະ ສສຂ ກໍໄດ້ຜັດປ່ຽນກັນເຜີຍແຜ່ ໂດຍທ່ານໄດ້ຍົກໃຫ້ເຫັນເຖິງວຽກງານທີ່ພົ້ນເດັ່ນ, ຈຸດອ່ອນ, ຂໍ້ຄົງຄ້າງທີ່ຈະໄດ້ສືບຕໍ່ປັບປຸງແກ້ໄຂ. ກອງປະຊຸມດັ່ງກ່າວ ແມ່ນເຫດການການເມືອງທີ່ສຳຄັນທາງປະຫວັດສາດ ຂອງພັກເຮົາ, ເປັນກອງປະຊຸມສືບຕໍ່ຍຶດໝັ້ນ ແລະ ເສີມຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການ ຂອງພັກເຂົ້າສູ່ລວງເລິກ ແລະ ກຳນົດທັດສະນະແຫ່ງການສ້າງ, ການຫັນປ່ຽນຢ່າງແຂງແຮງຕໍ່ການນຳພາ-ຊີ້ນຳປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ ຕາມທີ່ພັກ-ລັດ ເຮົາວາງໄວ້, ການຈັດຕັ້ງເຊື່ອມຊຶມຜົນສຳເລັດກອງປະຊຸມຄັ້ງນີ້ ເພື່ອແນໃສ່ເຮັດໃຫ້ພະນັກງານນຳພາພາຍໃນແຂວງ ໄດ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ, ກຳແໜ້ນເນື້ອໃນ, ມະຕິຄຳສັ່ງ ແລະ ວຽກງານຈຸດສຸມດ້ານຕ່າງໆ ທີ່ຕ້ອງເອົາໃຈໃສ່ນຳພາ-ຊີ້ນຳຢູ່ໃນແຕ່ລະຂົງເຂດວຽກງານຕາມຄວາມຮັບຜິດຊອບ, ຕິດພັນກັບການເສີມຂະຫຍາຍຄວາມເປັນເຈົ້າການໃນການນຳພາ-ຊີ້ນຳຈັດຕັ້ງປະຕິບັດໃຫ້ເປັນແຜນງານ, ໂຄງການ ແລະກິດຈະກຳລະອຽດໃນແຕ່ລະຂະແໜງການ, ທ້ອງຖິ່ນຮາກຖານ ເພື່ອຈັດຕັ້ງປະຕິບັດຕົວຈິງ, ສ້າງໄດ້ຜົນສຳເລັດອັນໃໝ່ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເພື່ອແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ຖືກຕ້ອງກັບຄວາມເປັນຈິງ. ພ້ອມດຽວກັນນັ້ນ, ເພື່ອເຮັດໃຫ້ການກະກຽມແລະດຳເນີນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີV ຖືກຕ້ອງຕາມເນື້ອໃນ, ຈິດໃຈ ຂອງກົມການເມືອງສູນກາງພັກ ກ່ຽວກັບການເລືອກຕັ້ງ ສສຊ ແລະ ສສຂ, ສອດຄ່ອງຕາມກົດໝາຍກຳນົດໄວ້; ເພື່ອເຊື່ອມຊຶມບັນດາເອກະສານ ກ່ຽວກັບການເລືອກຕັ້ງ, ແນະນຳການກະກຽມ ແລະ ດຳເນີນການເລືອກຕັ້ງໃຫ້ຖືກຕ້ອງຕາມກົດໝາຍ ແລະ ມີຄວາມເປັນເອກະພາບຢູ່ຂັ້ນແຂວງແລະຂັ້ນເມືອງ; ເພື່ອສຶກສາອົບຮົມການເມືອງ-ແນວຄິດ ແລະ ປຸກລະດົມເສີມຂະຫຍາຍຈິດໃຈຮັກຊາດ, ສິດປະຊາທິປະໄຕໃນການເລືອກຕັ້ງ, ຍົກສູງສະຕິຊາດ, ມີຄວາມເປັນເອກະພາບ ແລະ ຄວາມສາມັກຄີປອງດອງຊາດ, ມີສະຕິລະວັງຕົວ, ເປັນເຈົ້າການຕອບຕ້ານທຸກກົນອຸບາຍ ແລະ ການທຳລາຍຂອງພວກປໍລະປັກ ທີ່ຫວັງມ້າງເພທຳລາຍລະບອບໃໝ່ ຂອງພວກເຮົາ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ເອກະສານສຳຄັນຕ່າງໆ ຄື: ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກົມການເມືອງສູນກາງພັກ ກ່ຽວກັບການເພີ່ມທະວີນຳພາ-ຊີ້ນຳຂອງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V; ເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສສຊ ແລະ ສສຂ ເພື່ອເພີ່ມທະວີການນຳພາແນວຄິດ ແລະ ເສີມຂະຫຍາຍສິດປະຊາທິປະໄຕ ຂອງປະຊາຊົນລາວບັນດາເຜົ່າ ເຂົ້າໃນການເລືອກຕັ້ງ; ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ເພື່ອການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V. ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມ ແລະ ປະກອບຄຳຄິດຄຳເຫັນຕໍ່ແຕ່ລະເນື້ອໃນ ເພື່ອຄວາມເຂົ້າໃຈເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.



# ກອງປະຊຸມພົບປະແລກປ່ຽນບົດຮຽນ ລະຫວ່າງແຂວງຄຳມ່ວນ ແລະ ສະຫວັນນະເຂດ



(ສພຂ) - ວັນທີ 9 ມັງກອນຜ່ານມາທ່ານນາງພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງສະຫວັນນະເຂດ ແລະ ທ່ານ ພູທອນ ພຸດທະຂັນຕີ ເລຂາທິການສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະແລກປ່ຽນບົດຮຽນ ທີ່ສະພາປະຊາຊົນແຂວງຄຳມ່ວນ ໂດຍການເຂົ້າພົບ ທ່ານ ບຸນມີ ພົມມະສອນປະທານສະພາປະຊາຊົນແຂວງຄຳມ່ວນ ເພື່ອລາຍງານ ແລະແຈ້ງຈຸດປະສົງ ໃນການມາເຄື່ອນໄຫວເຮັດວຽກຄັ້ງນີ້; ຈາກນັ້ນ, ໄດ້ຈັດກອງປະຊຸມພົບປະແລກປ່ຽນບົດຮຽນ ລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ ກັບ ຄະນະເລຂາທິການສະພາປະຊາຊົນແຂວງສະຫວັນນະເຂດ ເຊິ່ງເປັນກຽດກ່າວຕ້ອນຮັບຄະນະນຳຂອງສະພາປະຊາຊົນແຂວງສະຫວັນນະເຂດ ແລະ ເຂົ້າຮ່ວມເຮັດວຽກໂດຍ ທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນແລະທ່ານ ສະເຫຼີມສັກ ແກ້ວຈັນທະລາ ເລຂາທິການສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍບັນດາທ່ານ ຮອງຄະນະເລຂາທິການ; ຫົວໜ້າ, ຮອງຫົວໜ້າຂະແໜງແລະຄະນະນຳແຂວງສະຫັວນນະເຂດ ນຳໂດຍທ່ານນາງພູທອນແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງສະຫວັນນະເຂດ ແລະ ທ່ານ ພູທອນ ພຸດທະຂັນຕີ ເລຂາທິການສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມຄະນະ ແລະ ພະນັກງານ-ລັດຖະກອນທີ່ຂຶ້ນກັບຄະນະເລຂາທິການສະພາປະຊາຊົນຂັ້ນແຂວງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ເພື່ອແລກປ່ຽນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງທັງສອງແຂວງ ໂດຍສະເພາະແມ່ນການເປັນເສນາທິການໃຫ້ແກ່ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງແລະຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ເປັນຕົ້ນ ແມ່ນວຽກງານດ້ານເນື້ອໃນ, ວຽກງານກົງຈັກການຈັດຕັ້ງແລະບຸກຄະລາກອນ, ວຽກງານງົບປະມານ-ການເງິນ, ວຽກງານບໍລິຫານ-ພິທີການ, ວຽກງານສື່ມວນຊົນ, ວຽກງານກວດກາ ແລະ ວຽກງານອື່ນໆ; ທັງນີ້, ກໍເພື່ອສ້າງເງື່ອນໄຂໃຫ້ບັນດາຂະແໜງການ ໄດ້ແລກປ່ຽນບົດເຊິ່ງກັນ ແລະ ກັນ ໃນການປະຕິບັດໜ້າທີ່ວຽກງານຜ່ານມາ ແລະ ການກະກຽມ ໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງ ໃຫ້ໄດ້ຮັບຜົນດີແລະສອດຄ່ອງກັບສະພາບເງື່ອນໄຂຈຸດພິເສດຂອງແຕ່ລະແຂວງ; ເພື່ອຮັບປະກັນທາງດ້ານຮູບການ, ວິທີການ, ຂັ້ນຕອນການດຳເນີນ, ການກະກຽມວຽກງານທາງດ້ານບໍລິຫານ ແລະ ພິທີການ ຮັບໃຊ້ການດຳເນີນກອງປະຊຸມດັ່ງກ່າວ ໃຫ້ມີຄວາມຖືກຕ້ອງ, ວ່ອງໄວ, ທັນການ ແລະ ມີຜົນສຳເລັດຕາມຄາດໝາຍ.

ທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ໄດ້ຕີລາລາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງຄະນະນຳສະພາປະຊາຊົນແຂວງສະຫວັນນະເຂດ ໃນຄັ້ງນີ້ ເປັນຄັ້ງທຳອິດ ເຊິ່ງການພົບປະແລກປ່ຽນບົດຮຽນຄັ້ງນີ້ ຈະໄດ້ຮັບຜົນໃນການຈັດຕັ້ງປະຕິບັດວຽກງານເປັນຢ່າງດີ; ຕາງໜ້າໃຫ້ແກ່ປະຊາຊົນຜູ້ມີສິດເລືອກຕັ້ງ ແລະ ການເປັນເສນາທິການໃຫ້ແກ່ ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງແລະຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ; ທັງເປັນການເພີ່ມທະວີການຮ່ວມມື ຂອງສະພາປະຊາຊົນແຂວງຄຳມ່ວນ ແລະ ສະພາປະຊາຊົນແຂວງສະຫັວນນະເຂດ ຕື່ມອີກ.



# ເຝິກອົບຮົມວຽກງານເລືອກຕັ້ງ ໃຫ້ແກ່ພະນັກງານຫຼັກແຫຼ່ງອ້ອມຂ້າງແຂວງ




(ສພຂ) - ວັນທີ 8 ມັງກອນຜ່ານມາຄະນະກຳມະການເລືອກຕັ້ງຂັ້ນແຂວງ (ຄລຂ) ໄດ້ຈັດກອງປະຊຸມ ເຝິກອົບຮົມ, ເຜີຍແຜ່ ແລະ ເຊື່ອມຊຶມເອກະສານວຽກງານເລືອກຕັ້ງໃຫ້ແກ່ພະນັກງານຫຼັກແຫຼ່ງອ້ອມຂ້າງແຂວງແລະເມືອງເພື່ອກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ(ສສຂ)ຊຸດທີV ທີ່ຫໍປະຊຸມໃຫຍ່ແຂວງອັດຕະປື, ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ; ມີບັນດາທ່ານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ພະແນກການ, ອົງການທຽບເທົ່າ, ນາຍ-ພົນທະຫານ, ນາຍ-ພົນຕຳຫຼວດ, ຄະນະກຳມະການເລືອກຕັ້ງຂັ້ນເມືອງ ແລະ ບັນດາອະນຸກຳມະການ ເຂົ້າຮ່ວມຫຼາຍກວ່າ 150 ທ່ານ.

ກອງປະຊຸມເຊື່ອມຊຶມການຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12ກັນຍາ2026ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳຂອງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V; ເອກະສານການເພີ່ມທະວີການນຳພາແນວຄິດ ແລະ ເສີມຂະຫຍາຍສິດປະຊາທິປະໄຕ ເພື່ອເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V; ເອກະສານເຊື່ອມຊຶມ ແລະ ກຳແໜ້ນກົດໝາຍວ່າດ້ວຍ ການເລືອກຕັ້ງ ສສຊ ແລະ ສສຂ; ເອກະສານເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງສະບັບເລກທີ 12/ຄລຂ, ລົງວັນທີ 5 ມັງກອນ 2026 ແລະ ເອກະສານແຈ້ງການແນະນຳ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງສະບັບເລກທີ 14/ຄລຂ, ລົງວັນທີ 5 ມັງກອນ 2026 ກ່ຽວກັບການສ້າງແຜນງົບປະມານຮັບໃຊ້ການເລືອກຕັ້ງສສຊ ຊຸດທີ X ແລະ ສສຂ ຊຸດທີ V; ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າ, ເຊື່ອມຊຶມແລະປະກອບຄຳເຫັນໃສ່ບັນດາເອກະສານ ເພື່ອຄວາມເຂົ້າໃຈເປັນເອກະພາບແລະເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດເປັນຢ່າງດີ.

ທ່ານ ນາງ ມີນາພອນ ໄຊສົມພູກ່າວວ່າ: ການເຝິກອົບຮົມວຽກງານຄັ້ງນີ້ເພື່ອເຮັດໃຫ້ການກະກຽມແລະດຳເນີນການເລືອກຕັ້ງ ຖືກຕ້ອງຕາມເນື້ອໃນຈິດໃຈຊີ້ນຳຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການຊີ້ນຳຂອງພັກ ຕໍ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ທັງເຊື່ອມຊຶມບັນດາເອກະສານສຳຄັນ ກ່ຽວກັບການເລືອກຕັ້ງ, ແນະນຳການກະກຽມແລະດຳເນີນການເລືອກຕັ້ງ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ມີຄວາມເປັນເອກະພາບໃນແຕ່ລະຂັ້ນ; ພ້ອມທັງສຶກສາອົບຮົມການເມືອງ-ແນວຄິດ ແລະ ປຸກລະດົມການເສີມຂະຫຍາຍຈິດໃຈຮັກຊາດ, ການໃຊ້ສິດປະຊາທິປະໄຕໃນການເລືອກຕັ້ງ, ຍົກສູງສະຕິຮັກຊາດ, ມີຄວາມເປັນເອກະພາບ ແລະ ຄວາມສາມັກຄີປອງດອງ, ມີສະຕິລະວັງຕົວ ຕໍ່ກົນອຸບາຍຂອງກຸ່ມຄົນທີ່ບໍ່ຫວັງດີມຸ້ງເພທຳລາຍລະບອບໃໝ່ຂອງພວກເຮົາ.




# ອົງການປົກປ້ອງກົດໝາຍແຂວງໄຊສົມບູນ ເຊື່ອມຊຶມເອກະສານການເລືອກຕັ້ງ




(ສພຂ) - ວັນທີ 19 ມັງກອນຜ່ານມາ ທີ່ສະໂມສອນເມືອງອະນຸວົງ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ຈັດກອງປະຊຸມເຝິກອົບຮົມແລະເຊື່ອມຊຶມເອກະສານການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ(ສສຂ)ຊຸດທີV ໂດຍການເປັນປະທານຂອງທ່ານ ຄຳພູທອນ ວົງພະຈັນ ຮອງປະທານສະພາປະຊາຊົນແຂວງໄຊສົມບູນ, ກຳມະການຄະນະກຳມະການເລືອກຕັ້ງຂັ້ນແຂວງ; ເຂົ້າຮ່ວມມີຕາງໜ້າຈາກອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳແຂວງ ແລະ ຄະນະກຳມະການ ຂອງສະພາປະຊາຊົນແຂວງ ຕະຫຼອດຮອດ ພະນັກງານຫຼັກແຫຼ່ງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ຄຳພູທອນ ວົງພະຈັນກ່າວວ່າ: ຈຸດປະສົງຂອງກອງປະຊຸມຄັ້ງນີ້ ເພື່ອຮັບປະກັນໃຫ້ແກ່ການກະກຽມ ແລະ ການດຳເນີນງານຂອງບັ້ນເລືອກຕັ້ງ ດຳເນີນຕາມການນຳພາ-ຊີ້ນຳຕາມມະຕິຕົກລົງຂອງກົມການເມືອງສູນກາງພັກ ທັງຖືກຕ້ອງກັບລັດຖະທຳມະນູນ, ກົດໝາຍ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ, ຮັບປະກັນເລືອກເຟັ້ນເອົາຜູ້ທີ່ມີມາດຖານຄົບຖ້ວນກວ່າໝູ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຮັບປະກັນການປ່ອນບັດເລືອກຕັ້ງມີຄວາມໂປ່ງໃສ ແລະ ສຳເລັດຕາມຄາດໝາຍທີ່ວາງໄວ້.

ກອງປະຊຸມໄດ້ເຊື່ອມຊຶມເອກະສານທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດໜ້າທີ່ ເພື່ອກຽມຄວາມພ້ອມໃຫ້ແກ່ການເລືອກຕັ້ງ ຈຳນວນ 4 ສະບັບຈາກບັນດາທ່ານຄະນະກຳມະການເລືອກຕັ້ງຄື: ມະຕິກົມການເມືອງສູນກາງພັກວ່າດ້ວຍການເພີ່ມທະວີນຳພາ-ຊີ້ນຳ ຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V; ເພີ່ມທະວີນຳພາແນວຄິດ ເສີມຂະຫຍາຍປະຊາທິປະໄຕປະຊາຊົນລາວບັນດາເຜົ່າເພື່ອການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V; ເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍການເລືອກຕັ້ງ ສສຊ ແລະ ສສຂ ແລະ ເຊື່ອມຊຶມການຈັດຕັ້ງປະຕິບັດແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ.

**(ອຳໄພພອນ ແກ້ວວິໄລ)**

## ເຝິກອົບຮົມ...

(ຕໍ່ຈາກໜ້າ 2)

Prevent and Counter the Use of Artificial Intelligence and New Technologies for Terrorism and Violent Extremism Purposes) ທີ່ນະຄອນຫຼວງມະນິລາ, ປະເທດຟີລິບປິນ ໂດຍມີຄະນະຜູ້ແທນທີ່ເປັນສະມາຊິກລັດຖະສະພາຈາກສະມັດຊາລັດຖະສະພາລະຫວ່າງຊາດອາຊຽນຫຼືໄອປາ(AIPA), ຕົວແທນຈາກລັດຖະສະພາທີ່ນຳໃຊ້ພາສາຝຣັ່ງ (APF), ຕົວແທນຈາກລັດຖະສະພາອາຣັບ (Arab Parliament), ຕົວແທນຈາກອົງການລັດຖະສະພາລະຫວ່າງປະເທດສະມາຊິກຂອງ CIS, ກອງເລຂາ AIPA ແລະ ຊ່ຽວຊານທີ່ກ່ຽວຂ້ອງ ເຂົ້າຮ່ວມຫຼາຍກວ່າ 60 ທ່ານ ເຊິ່ງການເຝິກອົບຮົມດຳເນີນໄປພາຍໃຕ້ຫົວຂໍ້ທີ່ສຳຄັນຄື: 1) ຄວາມເຂົ້າໃຈກ່ຽວກັບໂອກາດ, ຄວາມສ່ຽງ ແລະ ຜົນກະທົບ ໃນການນຳໃຊ້ປັນຍາປະດິດເຂົ້າໃນການຕ້ານການກໍ່ການຮ້າຍ; 2) ການຄວບຄຸມ AI ສຳລັບຈຸດປະສົງຕ້ານການກໍ່ການຮ້າຍ: ທາງດ້ານສິດທິມະນຸດ; 3) ການອອກນະໂຍບາຍຄຸ້ມຄອງຂອງພາກລັດ ແລະ ກົດລະບຽບຕ່າງໆ; ຫຼັງຈາກນັ້ນ, ຄະນະຜູ້ແທນສະມາຊິກໄອປາກໍໄດ້ຜັດປ່ຽນກັນມີຄຳເຫັນໃນເວທີອະພິປາຍທົ່ວໄປ ກ່ຽວກັບຂໍ້ດີ ແລະ ສິ່ງທ້າທາຍໃນການນຳໃຊ້ປັນຍາປະດິດເຂົ້າໃນການເຮັດວຽກແຫ່ງຊາດ ແລະ ກ່ຽວກັບສິດທິມະນຸດ ແລະ ການພິຈາລະນາດ້ານມະນຸດສະທຳ.

ໃນການເຂົ້າຮ່ວມເຝິກອົບຮົມຄັ້ງນີ້, ທ່ານ ປອ. ໄຊບັນດິດ ຣາຊະພົນ ໄດ້ມີຄຳເຫັນຕໍ່ງານກິດຈະກຳເປີດໂຕໂຄງການພັດທະນາຄວາມອາດສາມາດທາງດ້ານການປ່ຽນແປງສະພາບອາກາດ ສຳລັບສະມາຊິກລັດຖະສະພາໄອປາ (Kick Off Event of Capacity Development Programe on Climate Change for AIPA Member Parliaments) ໂດຍທ່ານຍົກໃຫ້ເຫັນເຖິງການປ່ຽນແປງສະພາບອາກາດຂອງໂລກ ກໍຄືໃນ ສປປລາວທີ່ມີປະຊາກອນ70% ຂອງປະເທດ ທີ່ອາໄສຢູ່ໃນເຂດຊົນນະບົດ ແລະ ອີງໃສ່ກະສິກຳເປັນຕົ້ນຕໍ, ແຕ່ມີພື້ນທີ່ໃນການເຮັດກະສິກຳພຽງ 30% ຂອງເນື້ອທີ່ທັງໝົດ, ເມື່ອໄດ້ຮັບຜົນກະທົບຈາກການປ່ຽນແປງສະພາບອາກາດເຊັ່ນ: ຝົນຕົກຫຼາຍກວ່າປົກກະຕິ ຫຼື ລະດູແລ້ງທີ່ຍາວນານ ໄດ້ສົ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ຊີວິດການເປັນຢູ່ຂອງປະຊາຊົນທົ່ວປະເທດ ແລະ ສົ່ງຜົນກະທົບທີ່ຮ້າຍແຮງຕໍ່ຂົງເຂດກະສິກຳ, ເສດຖະກິດ, ຂະແໜງການອື່ນໆ ແລະ ຄວາມໝັ້ນຄົງຕໍ່ສະບຽງອາຫານ, ນະໂຍບາຍ ແລະ ຍຸດທະສາດສີຂາວແຫ່ງຊາດ ໃນປີ 2030 ທີ່ ສປປລາວ ຈະນຳໃຊ້ເປັນເຄື່ອງມືໃນການພັດທະນາ ແລະ ສົ່ງເສີມ ການເຕີບໃຫຍ່ຂະຫຍາຍຕົວທາງດ້ານເສດຖະກິດ, ປັບປຸງການດຳລົງຊີວິດຂອງປະຊາຊົນໃນເຂດຊົນນະບົດ ກໍຄືປະຊາຊົນໃນທົ່ວປະເທດ ໃຫ້ດີຂຶ້ນ ໂດຍສະເພາະແມ່ນການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຈຳກັດ ໃຫ້ເກີດປະໂຫຍດສູງສຸດ, ຫຼຸດຜ່ອນຄວາມສ່ຽງດ້ານໄພພິບັດທາງທຳມະຊາດ ແລະ ສະພາບເສດຖະກິດໂລກທີ່ມີຄວາມຜັນຜວນເພີ່ມຂຶ້ນເຊິ່ງຍາກທີ່ຈະຄາດເດົາໄດ້; ນອກຈາກນັ້ນ, ຍັງເປັນການຫຼຸດຜ່ອນ ຫຼື ຈຳກັດການເພີ່ມຂຶ້ນຂອງມົນລະພິດ, ສິ່ງເສດເຫຼືອ ແລະ ການປ່ອຍອາຍພິດເຮືອນແກ້ວທີ່ເປັນສາເຫດຕົ້ນຕໍຂອງການປ່ຽນແປງສະພາບອາກາດ, ໄພພິບັດທາງທຳມະຊາດ ແລະ ພະຍາດຕ່າງໆ ທີ່ຈະເກີດຂຶ້ນໃນອະນາຄົດຂ້າງໜ້າອີກດ້ວຍ. ນອກນັ້ນ, ທ່ານຍັງຍົກໃຫ້ເຫັນເຖິງການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດລາວໃນການສ້າງຄວາມພ້ອມ ແລະ ສະໜັບສະໜູນຂໍ້ລິເລີ່ມໃນການຮັບມືກັບການປ່ຽນແປງສະພາບອາກາດ ແລະ ການຊຸກຍູ້ລັດຖະບານຂອງຕົນ ເພື່ອບັ້ນລຸຍຸດທະສາດແລະຂອບການຮ່ວມມືສາກົນກ່ຽວກັບການປ່ຽນແປງສະພາບອາກາດ ໂດຍສະເພາະແມ່ນໃນເວທີ AIPA ແລະ ໃນເວທີສາກົນຕ່າງໆ ທີ່ ສປປລາວ ເຂົ້າຮ່ວມຫຼືເປັນເຈົ້າພາບ. ໃນຕອນທ້າຍ, ທ່ານໄດ້ຮຽກຮ້ອງໃຫ້ສະມາຊິກລັດຖະສະພາໄອປາ, ບັນດາສະມາຊິກປະ ເທດອາຊຽນສືບຕໍ່ຍົກສູງການຮ່ວມມື ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ເພື່ອຮັບມືກັບການປ່ຽນແປງສະພາບອາກາດ ແລະ ການຈັດຕັ້ງປະຕິບັດແຜນງານຂອງອາຊຽນກ່ຽວກັບສິ່ງແວດລ້ອມ ແລະ ການປ່ຽນແປງຂອງສະພາບອາກາດ ຂອງສະຫະປະຊາຊາດ, ການຈັດຕັ້ງປະຕິບັດໂຄງການຕ່າງໆເພື່ອຮັບມືຕໍ່ການປ່ຽນແປງສະພາບອາກາດ ແລະ ຮ່ວມມືກັບບັນດາປະເທດທີ່ນອນໃນພາກພື້ນ ໃນແກ້ໄຂບັນຫາການປ່ຽນແປງສະພາບອາກາດ ແລະ ອະນຸລັກຄວາມຫຼາກຫຼາຍທາງຊີວະພາບ, ການຄຸ້ມຄອງປ່າໄມ້ ແລະ ຫຼຸດຜ່ອນການປ່ອຍອາຍພິດກາກບອນຈາກການນຳໃຊ້ທີ່ດິນ ແລະ ປັບ ປຸງຄວາມສາມາດຂອງຊຸມຊົນ ໃນການປັບຕົວເຂົ້າກັບຜົນກະທົບທາງລົບຂອງການປ່ຽນແປງສະພາບອາກາດໃນອະນາຄົດ.




# ຢາກໃຫ້ບອກກ່າວ

# ທິດດີ

ເພື່ອນຜູ້ອ່ານສ່ອງແສງມາຫາຜູ້ຂຽນ ຢາກໃຫ້ຊອກຫາຄຳບອກກ່າວຈາກພາກສ່ວນກ່ຽວຂ້ອງຊ່ວຍແດ່ ວ່າຊັ້ນ! ບັນຫາມີດັ່ງນີ້:

1.ເລື່ອງດິນຍຸບຢູ່ບ້ານທົ່ງມັ່ງເມືອງໄຊທານີ ນະຄອນຫຼວງວຽງຈັນ... ເລື່ອງນີ້ ການຈັດຕັ້ງເພິ່ນຖະແຫຼງຂ່າວແລ້ວ, ແຕ່ເພື່ອນຢາກຮູ້ວ່າ ຜ່ານມາເພິ່ນຕິດຕາມກອງປະຊຸມສະພາຂັ້ນນະຄອນຫຼວງ ກໍເຫັນວ່າ ສສນວ ບໍ່ເຫັນດີໃຫ້ມີການຂຸດຄົ້ນ ວ່າຊັ້ນ! ເບື້ອງອຳນາດການປົກຄອງນະຄອນຫຼວງ ກໍບໍ່ເຫັນດີ... ແຕ່ສຸດທ້າຍກໍຂຸດຄົ້ນ ແລະ ເກີດບັນຫາຄືເປັນຂ່າວ... ຢາກໃຫ້ອະທິບາຍເລື່ອງກົນໄກອະນຸຍາດ-ຄຸ້ມຄອງ ວ່າຊັ້ນ!

2. ເລື່ອງການຄຸ້ມຄອງລາຄາສິນຄ້າຢູ່ນະຄອນຫຼວງ ແຈ້ງການບໍ່ໃຫ້ມີການສວຍໂອກາດຂຶ້ນລາຄາສິນຄ້າ...ແຕ່ເຫັນທາງດ່ວນຂຶ້ນລາຄາ, ເຫັນບໍລິສັດເຄື່ອງດື່ມຂຶ້ນລາຄາ ມັນຊິບໍ່ສວນທາງກັນບໍ? ເງິນເດືອນປັບຂຶ້ນ ກໍແລ່ນນຳລາຄາສິນຄ້າບໍ່ທັນ ແລ້ວໃຜຈະອະທິບາຍກົນໄກຄຸ້ມຄອງລາຄາສິນຄ້າ ວ່າຊັ້ນ!

ພວກເພິ່ນວ່າສະເໜີບັນຫາຢູ່ນະຄອນຫຼວງສາກ່ອນ... ຫາກໄດ້ຟັງຄຳອະທິບາຍຈາກພາກສ່ວນກ່ຽວຂ້ອງແລ້ວ ຈະຂອບໃຈເປັນຢ່າງສູງ.

ຜູ້ຂຽນສະເໜີບັນຫານີ້ຂຶ້ນ ແມ່ນປະຕິບັດຕາມກົດໝາຍວ່າດ້ວຍສື່ມວນຊົນສະບັບປັບປຸງປີ 2016 ໃນມາດຕາ 10 ສິດເສລີພາບຂອງພົນລະເມືອງລາວ ໃນການປະກອບຄຳເຫັນພົນລະເມືອງລາວມີສິດເສລີພາບໃນການປະກອບຄຳເຫັນຜ່ານສື່ມວນຊົນກ່ຽວກັບ:

- ການສ້າງ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ.

- ທັດສະນະຕໍ່ສະພາບພາຍໃນ ແລະ ການຕ່າງປະເທດ.

- ການຕຳນິຕິຊົມແບບສ້າງສັນຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

ມາດຕານີ້ແມ່ນຢູ່ພາກທີ II: ສິດເສລີພາບຂອງພົນລະເມືອງລາວດ້ານສື່ມວນຊົນ ລວມມີ 4 ມາດຕາຄື:

ມາດຕາ9: ສິດເສລີພາບຂອງພົນລະເມືອງລາວດ້ານສື່ມວນຊົນ.

ມາດຕາ 10: ສິດເສລີພາບຂອງພົນລະເມືອງລາວໃນການປະກອບຄຳເຫັນ.

ມາດຕາ 11: ສິດເສລີພາບຂອງພົນລະເມືອງລາວກ່ຽວກັບຂໍ້ມູນ-ຂ່າວສານ.

ມາດຕາ12: ການນຳໃຊ້ສິດເສລີພາບຂອງພົນລະເມືອງລາວ.

ບັນຫາຂ້າງເທິງທີ່ນຳສະເໜີນັ້ນ ແມ່ນປະຕິບັດຕາມຕົວບົດກົດໝາຍຢ່າງເຄັ່ງຄັດເປັນປົກກະຕິບໍ່?.




## ຜູ້ສະໝັກ...

(ຕໍ່ຈາກໜ້າ 1)

(ສພຊ)-ວັນທີ 15-20 ກຸມພານີ້, ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ຊຸດທີ X ແລະ ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ (ສສຂ) ສະຫວັນນະເຂດປະຈຳເຂດເລືອກຕັ້ງເມືອງ ຊຸດທີ V ໄດ້ສືບຕໍ່ລົງໂຄສະນາຫາສຽງ ແລະ ສະເໜີຕົວຕໍ່ຜູ້ມີສິດເລືອກຕັ້ງຢູ່5ເມືອງ ຄື: ໄຊພູທອງ, ຈຳພອນ, ຊົນນະບູລີ, ສອງຄອນ ແລະ ທ່າປາງທອງ, ແລະ ນະຄອນໄກສອນ ພົມວິຫານ ລວມ 9 ຈຸດ ໂດຍມີອຳນາດການປົກຄອງເມືອງ-ນະຄອນ, ພະນັກງານຫຼັກແຫຼ່ງ, ອຳນາດການປົກຄອງບ້ານພ້ອມດ້ວຍຜູ້ມີສິດປ່ອນບັດເລືອກຕັ້ງເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ພາຍຫຼັງທີ່ບັນດາທ່ານຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ ໄດ້ສະເໜີຕົວສຳເລັດ ກໍໄດ້ເປີດໂອກາດໃຫ້ຜູ້ມີສິດເລືອກຕັ້ງ ມີຄຳຄິດຄຳເຫັນແລະຄຳສະເໜີຕ່າງໆ; ຈາກນັ້ນ, ຜູ້ສະໝັກຮັບເລືອກຕັ້ງ ກໍຮັບເອົາຄຳສະເໜີ ພ້ອມທັງຮຽກຮ້ອງໃຫ້ຜູ້ມີສິດເລືອກຕັ້ງ ຈົ່ງພ້ອມກັນໄປໃຊ້ສິດຂອງຕົນໃນການເລືອກຕັ້ງໃນວັນອາທິດທີ 22 ກຸມພາ ທີ່ຈະມາເຖິງນີ້ ໃຫ້ບັນລຸຜົນສຳເລັດຕາມສີ່ລະດັບຄາດໝາຍໃນມະຕິກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຄື: 1) ນຳພາຜູ້ມີສິດເລືອກຕັ້ງໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ 100%, 2) ນຳພາຜູ້ມີສິດເລືອກຕັ້ງ ໃຫ້ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງ ຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, 3) ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພ 100% ແລະ 4) ນຳພາວຽກງານປ່ອນບັດເລືອກຕັ້ງ ໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ 100%.

ເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ມີຜູ້ສະໝັກຮັບເລືອກຕັ້ງເປັນສສຊຈຳນວນ 28 ທ່ານ ຍິງ 7 ທ່ານ, ເລືອກເອົາ21 ທ່ານ ໃນນັ້ນ, ອາຍຸແຕ່ 45 ປີລົງມາ ມີ 6 ທ່ານ ຍິງ 1 ທ່ານ, 46-55 ປີ ມີ 14 ທ່ານ ຍິງ 4 ທ່ານ, 56-60 ປີ ມີ 5 ທ່ານ ຍິງ 1 ທ່ານ, 61 ປີຂຶ້ນໄປ ມີ 3 ທ່ານ ຍິງ 1 ທ່ານ; ເຜົ່າລາວ 27 ທ່ານ ຍິງ 7 ທ່ານ ແລະ ເຜົ່າບຣູ 1 ທ່ານ; ລະດັບວິຊາສະເພາະ ຂັ້ນປະລິນຍາຕີ 4 ທ່ານ ຍິງ 3 ທ່ານ, ປະລິນຍາໂທ 17 ທ່ານ ຍິງ 3 ທ່ານ ແລະ ປະລິນຍາເອກ 7 ທ່ານ ຍິງ 1 ທ່ານ; ສຳລັບຜູ້ສະໝັກຮັບເລືອກຕັ້ງເປັນ ສສຂ ປະຈຳເຂດເລືອກຕັ້ງເມືອງ-ນະຄອນນັ້ນ ມີເມືອງ-ນະຄອນລະ 7 ທ່ານ, ເລືອກເອົາ 5 ທ່ານ.

**(ກົງທະນູຄຳ ພົມພັດເສລີ)**



## ຄລຊ...

(ຕໍ່ຈາກໜ້າ 1)

ຕັ້ງລະດັບຊາດ(ຄລຊ)ວາງອອກ; ວັນທີ 20 ກຸມພານີ້ ທີ່ສະພາປະຊາຊົນແຂວງຫຼວງພະບາງ ໄດ້ຈັດກອງປະຊຸມລາຍງານການເຄື່ອນໄຫວວຽກງານເລືອກຕັ້ງຂອງອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ກຳມະການຄະນະກຳມະການເລືອກຕັ້ງລະດັບຊາດທັງເປັນກຳມະການອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ ພ້ອມດ້ວຍຄະນະ ໄດ້ລົງຊຸກຍູ້ແລະຕິດຕາມກວດກາ ເພື່ອເກັບກຳບັນດາຄຳຄິດເຫັນ, ທາງສຽງສັງຄົມ, ຂໍ້ສະດວກແລະຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ກ່ອນການເລືອກຕັ້ງຢູ່ແຂວງຫຼວງພະບາງ ເຊິ່ງມີບັນດາທ່ານໃນອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ, ເມືອງ-ນະຄອນ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ສິງຕັນ ໄຊລືຊົ່ງ ຮອງປະທານສະພາປະຊາຊົນແຂວງ, ກຳມະການຄະນະກຳມະການເລືອກຕັ້ງແຂວງຫຼວງພະບາງ, ຫົວໜ້າອະນຸກຳມະການໂຄງປະກອບແລະບຸກຄະລາກອນລາຍງານໃຫ້ຮູ້ວ່າ: ພາຍຫຼັງທີ່ໄດ້ຮັບເອກະສານຕ່າງໆຈາກສູນກາງກ່ຽວກັບວຽກງານເລືອກຕັ້ງ, ຄະນະປະຈຳສະພາປະຊາຊົນແຂວງ ໄດ້ຜັນຂະຫຍາຍມາເປັນຂອງທ້ອງຖິ່ນເຊິ່ງໄດ້ປະສານສົມທົບກັບບັນດາອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງໃນການຄົ້ນຄວ້າໂຄງປະກອບ, ກຳນົດເປົ້າໝາຍແລະຈຳນວນຜູ້ລົງສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6 ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ(ສສຂ)ຫຼວງພະບາງ ຊຸດທີ V; ໄດ້ຮ່າງຄຳແນະນຳຕ່າງໆກ່ຽວກັບວຽກງານບຸກຄະລາກອນ ເປັນຕົ້ນແມ່ນ: ມາດຕະຖານເງື່ອນໄຂຂອງຜູ້ລົງສະໝັກ, ແບບຟອມການຂຽນປະຫວັດຫຍໍ້, ຮູບພາບ ແລະ ເອກະສານຕ່າງໆຕາມມາດຕາ 14 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ການລົງໂຄສະນາຫາສຽງ ເຊິ່ງແຂວງຫຼວງພະບາງ ມີຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ 14 ທ່ານ ຍິງ 5 ທ່ານ, ເລືອກເອົາ 10 ທ່ານ ແລະ ຜູ້ສະໝັກຮັບເລືອກຕັ້ງເປັນສສຂ ມີ84 ທ່ານ ຍິງ 20 ທ່ານ, ເລືອກເອົາ 60 ທ່ານ; ໄດ້ສຳເລັດການສັງລວມຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງ ເຊິ່ງມີ 261,004 ຄົນ ຍິງ 129,461 ຄົນ, ສະຖານທີ່ປ່ອນບັດ ແລະ ໜ່ວຍປ່ອນບັດທັງໝົດໃນທົ່ວແຂວງລວມມີ787 ໜ່ວຍ.

ທ່ານ ສຸບັນ ສະວະບຸດ ໄດ້ຮຽກຮ້ອງອະນຸກຳມະການທີ່ກ່ຽວຂ້ອງ ແລະ ບຸກຄະລາກອນທີ່ຮັບຜິດຊອບຫີບບັດຕ້ອງຮັກສາຫີບປ່ອນບັດ, ບັດລົງຄະແນນສຽງແລະການນັບຄະແນນສຽງໃຫ້ຖືກຕ້ອງຕາມຈຳນວນ ເພື່ອລາຍງານໃຫ້ ຄລຊ ຮັບຊາບທັນເວລາ ແລະ ເພີ່ມທະວີການໂຄສະນາຜ່ານຊ່ອງທາງຕ່າງໆ ເພື່ອໃຫ້ທົ່ວສັງຄົມຮັບຮູ້ເຂົ້າໃຈເຖິງຄວາມໝາຍສຳຄັນຂອງການເລືອກຕັ້ງຄັ້ງນີ້ ເພາະເປັນເຫດການການເມືອງໃຫຍ່ຂອງຊາດ, ເປັນການປັບປຸງອົງການອຳນາດລັດຂັ້ນຕ່າງໆໃນທຸກ 5 ປີ ຈະມີ 1 ຄັ້ງ.

**(ວິລິຍະ ວັນນະສີ)**



## ສຸກສະບາຍຫາຍໂຣຄາ

# ອາຫານເສີມສ້າງເມັດເລືອດແດງ ຊ່ວຍບຳລຸງເລືອດປ້ອງກັນເລືອດຈາງ

**# ຮຽບຮຽງໂດຍ: ກະທິ**



**1. ຕັບ**

ຕັບເປັນແຫຼ່ງສຳຄັນຂອງທາດເຫຼັກ, ທອງແດງ, ວິຕາມິນບີ 12 ໂຟເລດ ແລະ ວິຕາມິນເອ ເຊິ່ງສານອາຫານເຫຼົ່ານີ້ມີບົດບາດສຳຄັນໃນການສ້າງເມັດເລືອດແດງ ໂດຍສະເພາະທາດເຫຼັກທີ່ຊ່ວຍໃນການຜະລິດເຮໂມໂກລບິນເຊິ່ງເປັນໂປຼຕີນໃນເມັດເລືອດແດງທີ່ຊ່ວຍລຳລຽງອົກຊີໄປຍັງຈຸລັງຕ່າງໆໃນຮ່າງກາຍ ຖ້າເຮົາຕ້ອງການເພີ່ມປະລິມານເມັດເລືອດແດງ ຕັບຈາກສັດຊະນິດຕ່າງໆ ເຊັ່ນ: ຕັບໝູ, ຕັບງົວ ຫຼື ຕັບໄກ່ ຄືໂຕເລືອກທີ່ດີ

**2. ໄຂ່**

ໄຂ່ບໍ່ພຽງແຕ່ເປັນແຫຼ່ງໂປຼຕີນທີ່ດີ ແຕ່ຍັງເປັນອາຫານສ້າງເມັດເລືອດແດງທີ່ເຕັມໄປດ້ວຍວິຕາມິນບີ 12, ໂຟເລດ ແລະ ວິຕາມິນເອ ເຊິ່ງຈຳເປັນຕໍ່ການສ້າງ ແລະ ຟື້ນຟູເມັດເລືອດແດງ ການກິນໄຂ່ໃນຄາບອາຫານປະຈຳວັນຈະຊ່ວຍໃຫ້ທ່ານໄດ້ຮັບສານອາຫານທີ່ຈຳເປັນສຳຫຼັບການສ້າງເມັດເລືອດແດງຢ່າງເຕັມທີ່

**3. ຊີ້ນສັດ**

ຊີ້ນສັດ ໂດຍສະເພາະຊີ້ນແດງ ເຊັ່ນ: ຊີ້ນງົວ, ຊີ້ນໝູ ແລະ ຊີ້ນແບ້ ເປັນແຫຼ່ງຂອງທາດເຫຼັກໃນຮູບແບບຮີມ (heme iron) ທີ່ຮ່າງກາຍສາມາດດູດຊຶມໄດ້ງ່າຍ ເຊິ່ງມີຄວາມສຳຄັນຕໍ່ການຜະລິດເຮໂມໂກລບິນ ການກິນຊີ້ນສັດຈຶ່ງເປັນວິທີໜຶ່ງໃນການເພີ່ມປະລິມານເມັດເລືອດແດງໃຫ້ຮ່າງກາຍໄດ້ຢ່າງມີປະສິດທິພາບ.

**4. ອາຫານທະເລ**

ອາຫານທະເລ ເຊັ່ນ: ຫອຍແມງພູ່, ຫອຍນາງຣົມ, ປາແຊລມ່ອນ ແລະ ປາທູ ເປັນອາຫານທີ່ເຕັມໄປດ້ວຍທາດເຫຼັກ, ວິຕາມິນບີ 12 ແລະ ທອງແດງ ເຊິ່ງຊ່ວຍໃນຈະບວນການສ້າງເມັດເລືອດແດງ ອາຫານທະເລນອກຈາກຈະແຊບແລ້ວ ຍັງຊ່ວຍເສີມສ້າງສຸຂະພາບຂອງເມັດເລືອດແດງໄດ້ດີອີກດ້ວຍ.

**5. ຜັກໃບຂຽວ**

ຜັກໃບຂຽວ ເຊັ່ນ: ຜັກກາດນາ, ຜັກໂຫມ... ເປັນແຫຼ່ງຂອງທາດເຫຼັກ, ໂຟເລດ ແລະ ວິຕາມິນຊີ ເຊິ່ງວິຕາມິນຊີຊ່ວຍໃຫ້ຮ່າງກາຍສາມາດດູດຊຶມທາດເຫຼັກໄດ້ດີຂຶ້ນ ການກິນຜັກໃບຂຽວຢ່າງສະໝ່ຳສະເໝີ ຈະຊ່ວຍໃຫ້ຮ່າງກາຍໄດ້ຮັບສານອາຫານທີ່ຈະເປັນຕໍ່ການສ້າງເມັດເລືອດແດງ.

**6. ຖົ່ວ**

ຖົ່ວຊະນິດຕ່າງໆ ເຊັ່ນ: ຖົ່ວແດງ, ຖົ່ວດຳ, ຖົ່ວເຫຼືອງ ແລະ ຖົ່ວດິນ ເປັນແຫຼ່ງສຳຄັນຂອງທາດເຫຼັກ, ໂຟເລດ ແລະ ທອງແດງ ເຊິ່ງເປັນສານອາຫານທີ່ມີສ່ວນຊ່ວຍໃນການຜະລິດເມັດເລືອດແດງ ການກິນຖົ່ວເປັນປະຈຳສາມາດຊ່ວຍໃຫ້ຮ່າງກາຍມີການສ້າງເມັດເລືອດແດງຢ່າງຕໍ່ເນື່ອງ.

**7.ໝາກໄມ້ແລະໝາກໄມ້ອົບແຫ້ງ**

ໝາກໄມ້ສົດແລະໝາກໄມ້ອົບແຫ້ງ ເຊັ່ນ: ອິນທະຜາລຳ, ສະຕໍເບີຣີ, ລູກເກດ... ເປັນອາຫານທີ່ອຸດົມໄປດ້ວຍທາດເຫຼັກ ແລະ ວິຕາມິນຊີ ການກິນໝາກໄມ້ລົດສົ້ມ ເຊັ່ນ: ໝາກກ້ຽງ ຫຼື ໝາກນາວ ຮ່ວມກັບໝາກໄມ້ເຫຼົ່ານີ້ ຈະຊ່ວຍໃຫ້ຮ່າງກາຍສາມາດດູດຊຶມທາດເຫຼັກໄດ້ດີຂຶ້ນ ແລະ ຊ່ວຍໃນການສ້າງເມັດເລືອດແດງຢ່າງມີປະສິດທິພາບ.

ການດູແລໂຕເອງດ້ວຍອາຫານທີ່ຊ່ວຍສ້າງເມັດເລືອດແດງເປັນວິທີໜຶ່ງທີ່ສາມາດເຮັດໄດ້ງ່າຍ ແລະ ປອດໄພ ຢ່າລືມໃສ່ໃຈສຸຂະພາບດ້ວຍການກິນອາຫານທີ່ຫຼາກຫຼາຍ ແລະ ມີປະໂຫຍດ.




# ໄຕ່ຕອງດີໆ ຈຶ່ງເລືອກເອົາເນີ

**# ຫຼານເຈົ້ານ້ອຍ**

❊ ຄົນລາວຢາຍຢັ້ງພື້ນ ດິນດ່ານດອຍສູງ
ລົງສູ່ດິນແດນພຽງ ແຕ່ເໜືອເຖິງໃຕ້
ມີທັງຄົນລວຍລົ້ນ ເງິນຄຳເຕັມຕຶ່ງ
ຖານະຈົນຍາກໄຮ້ ລາຍໄດ້ບໍ່ສູງ ກໍມີ

❊ ສ່ວນວ່າເມືອງໃຫຍ່ກວ້າງ ເຮືອງເຮື່ອແສງສີ
ເສັ້ນທາງທຽວໄປມາ ໃຫຍ່ຍາວງາມກ້ຽງ
ຫຼາກຫຼາຍເຮືອນຊານສ້າງ ຫຼູຫຼາຫຼັງໃຫຍ່
ຜູ້ຄົນແສນຊື່ນຊ້ອຍ ຫາຍເສົ້າໂສກກະໃຈ

❊ ມີຫຼາຍຄົນຍາກໄຮ້ ອາໄສຢູ່ພິງໄພ
ນອນຕູບຕອງກຸງມຸງ ໂປດເປັນຮູໂຫວ້
ແປ້ນເກົ່າເປັນຕຽງຕັ້ງ ຮອງນອນຍາມຄ່ຳ
ຜ້າຫົ່ມບາງຂາດສ້ອຍ ພໍໄດ້ຫົ່ມຄິງ

❊ ຫຼົງລໍ່າດູຂາດຂັ້ນ ຄວາມມັ່ງມີຈົນ
ແຕກຕ່າງທັງຫຼຸດໂຕນ ບໍ່ມັ່ງມີສະເໝີດ້າມ
ຫາກບໍ່ມີໃຜຜູ້ ຫຼຽວດູແລລ່ຳ
ຄວາມຕ່າງກັນຍິ່ງຍ້າຍ ເຮົາໃຫ້ຫ່າງກັນ

❊ ວັນທີ 22 ກຸມພາແມ່ນມື້ ໂອກາດປວງຊົນ
ໄປເລືອກເອົາຕົວແທນ ນັ່ງສະພາຕາງໜ້າ
ເອົາຄົນມີມາດຖານຖ້ວນ ບໍລິສຸດທົ່ງທ່ຽງ
ເພື່ອລົງມາຊ່ວຍແກ້ ບັນຫາຄ້າງຂອດຄາ

❊ ບໍ່ແມ່ນໄປເລືອກຜູ້ ຜິວຜ່ອງເງົາງາມ
ແຕ່ວ່າດວງແດເໝືອນ ໝູ່ສິງເສືອຮ້າຍ
ຈົ່ງພາກັນເອົາຜູ້ ຫວັງດູແລລ່ຳ
ບໍ່ເລືອກຄົນໂລບລ້ຽວ ລວງລໍ້ຫຼອກປະຊາ

❊ ຜູ້ແທນຕ້ອງແມ່ນຜູ້ ອາສາຊ່ວຍປວງຊົນ
ພ້ອມພໍ່າມີປັນຍາ ສະຫຼາດແຫຼມຄົມກ້າ
ວາທະສິນຄົມເຂັ້ມ ມອງບັນຫາຊອດກະຈ່າງ
ໄຂຂອດຄວາມເດືອດຮ້ອນ ອາສາແກ້ຊ່ວຍປະຊາ

❊ ເລືອກຜູ້ແທນຈຶ່ງໄດ້ ຕອງໄຕ່ດີໆ
ບໍ່ແມ່ນໂລເລໝາຍ ເລືອກເອົາພໍແລ້ວ
ເພາະວ່າຜົນເສຍ-ໄດ້ ຕາມມາມີສ່ວນ
ເຮັດໃຫ້ພົງພີ່ນ້ອງ ຈົນໄຮ້-ຮັ່ງມີ ທ່ານເອີຍ!



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **ດຽກ**ເລືອກຕັ້ງພອມຊຸບຊ້ຽວ ໂດຍດ່ອນປະສານງານ ນັບແຕ່ສູນກາງ ເຖິງເຂດແຂວງເໜືອໃຕ້ ຍາຍກັນໄປຄົບກ້າ ເກັບກ່າຂໍ້ມູນທັງເຜີຍແຜ່ ໃຫ້ພໍ່ແມ່ພີ່ນ້ອງ ປະຊາຮູ້ທົ່ວເຖິງ ຍັງບໍ່ເຖິງຊີຮອດມື້ ເລືອກປ່ອນເອົາ **ສສ** ສູ່ສອງສະພາ ບໍ່ຫລັ່ນແດດຝົນທັງໜາວຮ້ອນ ໂດສະບາບໍ່ຢຸດຢ່ອນ **ກຽມເດີ!** ກຽມປ່ອນບັດເລືອກຕັ້ງ **ສສຊ-ສສຂ** ເຂົ້າບັ່ງສະພາ **ທ່ານເອີຍ!**

❊ **ຄອັບ**ຫຼົງວັນອາເລນທາຍກາຍຜ່ານພົ້ນ **14 ກຸມພາ** ຊ່າວ່າເປັນວັນດີ ຮັກຫອມຫວານຊຶ້ງ ຈົບຈາກໄປເສັດສິ້ນ ຍິນຫຼາຍຄົນຊານກ່າວ ວ່າທັງເມົາເມື່ອຍນ້ອຍ ສະຫຼອງຫຼົ້ນມ່ວນມັນ ບາງຄົນນັ້ນ ໄດ້ດອກຫຼວງຫຼາຍ **ກຸຫຼາບ**ວັນອາເລນທາຍ ຊື່ນໃຈສະອອນໂອ້ ບາງຄົນໄຊຊົມເສົ້າ ຫວອຍເຫງົາບໍ່ໄດ້ດອກ **(ເພີ່ນລົ້ມ)** ເພາະວ່າຄວາມຮັກຮ້າງໄກຊ້າງຫ່າງລາ **(ອີຕົບເດ)** ຄັນວ່າຈິງໃຈແທ້ ຢ່າລໍ່ແຕ່ວາເລນທາຍ ຊຸປ່ອຍເວລາກາຍ ລ່ວງເລີຍໄລລ້າ ຮີບຟ້າວແບນທັບໜ້າ ເຂົ້າຫາກັບຮັກທ່ ທາກລ່ແຕ່ມື້ນັ້ນ ສາມຮ້ອຍຫົກສິບສີ່ວັນປ່ອຍລ້າ ຊີວາສັ້ນສ່ວງບໍ່ເຫັນ **(ເສຍໃຈໄດ່)** ສ່ວນວ່າໃຜພາດພົ້ງ ບໍ່ໄດ້ດອກວາເລນທາຍ ໃຫ້ເຈົ້າອົດໃຈລ່ ຕໍ່ໄປເມືອໜ້າ ຫວັງວ່າຄົງພານພໍ້ ຄົນລ່ມອບຮັກ ເມື່ອນັ້ນຄົງຊິໄດ້ ຄືດ້ານດົ່ງເຂົາ **(ດອກກຸຫຼາບ)!**

## ຊອບຍິ້ມ

**# ພົ້ງລົ່ງ**

### ເລື່ອງ: ໃຜເມົາກັບແທ້

ຊຽງເສີຍເປັນຄົນມັກເມົາ, ລາວຈະກິນເຫຼົ້າຈົນເມົາແລ້ວຈຶ່ງກັບເຮືອນທຸກມື້ ຈົນຜູ້ເປັນເມຍມີຄວາມເອືອມລະອາ, ມື້ນີ້ກໍເຊັ່ນດຽວກັນ ເມຍຈຶ່ງຮ້ອງດ່າໄປວ່າ:

"ບັກສັບດາບ, ມຶງເມົາມາອີກແລ້ວ... ບັກຊົ່ວ"

ຊຽງເສີຍຍິ້ມຢ່າງອາລົມດີ ແລ້ວເອົ້າຊື້ບວ່າ:

"ເດະ... ເດ໊ະ... ຜົວເຈົ້າຊື່ຊຽງເສີຍເອີ້ນວ່າບັກສັບດາບ ບັກຊົ່ວ ໄດ້ຈັ່ງໃດ... ຮາຮາຮາ ສະຫຼຸບແມ່ນໃຜເມົາກັບແທ້???"

## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

ເຫັນວ່າປາກນົກນ້ອຍ
ຢ່າຟ້າວຢຽບລົງແຮງຫຼາຍເນີ
ບາດນົກໂຮມແຮງກັນ
ຊິຕອດຕາຍຕາຊ້າງ

ລັດຖະສະພາຕ່າງປະເທດ

# BNP ໄດ້ຮັບ 211 ທີ່ນັ່ງ ໃນການເລືອກຕັ້ງສະພາແຫ່ງຊາດ

(Xinhua)-ການລົງຄະແນນສຽງໃນການເລືອກຕັ້ງສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາຊົນ ບັງກລາເທດ ໄດ້ສິ້ນສຸດລົງໃນເວລາ16:30ໂມງ ຂອງວັນພະຫັດທີ 12 ກຸມພາ ຜ່ານມາຕາມເວລາທ້ອງຖິ່ນ,ຄະນະກຳມະການເລືອກຕັ້ງບັງກລາເທດ(Bangladesh Election Commission - BEC) ກ່າວວ່າ ການນັບຄະແນນຈະເລີ່ມຂຶ້ນທັນທີຫຼັງຈາກສິ້ນສຸດການລົງຄະແນນສຽງ.

ການລົງຄະແນນສຽງໄດ້ເລີ່ມຕົ້ນໃນເວລາ 07:30 ໂມງ ໃນສູນລົງຄະແນນສຽງຫຼາຍກວ່າ 42,000 ແຫ່ງ; ອີງຕາມຂໍ້ມູນຂອງBEC, ມີຜູ້ສະໝັກທັງໝົດ 2,028 ຄົນ ແຂ່ງຂັນກັນເພື່ອຊິງທີ່ນັ່ງໃນ 299 ຈາກ 300 ເຂດເລືອກຕັ້ງທີ່ມາຈາກການເລືອກຕັ້ງໂດຍກົງ, ການເລືອກຕັ້ງສຳລັບທີ່ນັ່ງສຸດທ້າຍ ຈະຈັດຂຶ້ນໃນພາຍຫຼັງເນື່ອງຈາກຜູ້ສະໝັກຄົນໜຶ່ງເສຍຊີວິດ.

ນີ້ແມ່ນການເລືອກຕັ້ງທົ່ວໄປຄັ້ງທຳອິດຂອງປະເທດໃນອາຊີໃຕ້ແຫ່ງນີ້ ນັບຕັ້ງແຕ່ນາງ ເຊກ ຮາສິນາ (Sheikh Hasina) ລາອອກຈາກຕຳແໜ່ງນາຍົກລັດຖະມົນຕີໃນເດືອນສິງຫາ 2024 ທ່າມກາງຄວາມວຸ້ນວາຍທາງການເມືອງທົ່ວປະເທດ.

ໃນປະເທດບັງກລາເທດ, ພັກການເມືອງຈະສາມາດສ້າງຕັ້ງລັດຖະບານໄດ້ ກໍຕໍ່ເມື່ອໄດ້ຮັບ 151 ທີ່ນັ່ງ.

ເຈົ້າໜ້າທີ່ລະດັບສູງກ່າວໃນວັນ 13 ກຸມພາວ່າ ພັກຊາດນິຍົມບັງກລາເທດ (Bangladesh Nationalist Party-BNP) ນຳໂດຍ ທາຣິກ ຣາມັນ (Tarique Rahman) ໄດ້ຮັບ 211 ທີ່ນັ່ງ.

ອັກຕາ ອາເໝັດ (Akhtar Ahmed) ເລຂາທິການອາວຸໂສຂອງຄະນະກຳມະການເລືອກຕັ້ງ ກ່າວກັບສື່ມວນຊົນວ່າ ພັກ Jamaat-e-Islam ແຫ່ງບັງກລາເທດ ໄດ້ອັນດັບທີສອງດ້ວຍ 68 ທີ່ນັ່ງ, ຂະນະທີ່ 20 ທີ່ນັ່ງເປັນຂອງຜູ້ສະໝັກເອກະລາດແລະພັກຂະໜາດນ້ອຍອື່ນໆ;ອາເໝັດກ່າວວ່າຈຳນວນຜູ້ໄປໃຊ້ສິດເລືອກຕັ້ງໃນການເລືອກຕັ້ງສະພາແຫ່ງຊາດຊຸດທີ XIII ຂອງບັງກລາເທດ ບັນລຸ 59.44% ຂອງຜູ້ມີສິດເລືອກຕັ້ງຫຼາຍກວ່າ 127 ລ້ານຄົນ.

ກ່ອນໜ້ານີ້, ອາຊິຟ ນາຊຣຸລ (Asif Nazrul) ທີ່ປຶກສາດ້ານກົດໝາຍ, ຍຸຕິທຳແລະກິດຈະການລັດຖະສະພາ ຂອງລັດຖະບານຮັກສາການບັງກລາເທດ ກ່າວວ່າ ອຳນາດຈະຖືກສົ່ງມອບໃຫ້ລັດຖະບານທີ່ມາຈາກການເລືອກຕັ້ງໃໝ່ ກ່ອນເດືອນຣາມາດານ (Ramadan) ທີ່ເປັນເດືອນແຫ່ງການຖືສິນອົດເຂົ້າຂອງຊາວມຸດສະລິມ ເຊິ່ງຈະເລີ່ມຕົ້ນໃນວັນທີ 19 ກຸມພາ ຫຼື ປະມານນັ້ນ. ອາຊິຟ ນາຊຣຸລ ກ່າວວ່າ "ຫຼັງຈາກມີການປະກາດຜົນການເລືອກຕັ້ງຢ່າງເປັນທາງການໃນຈົດໝາຍເຫດທາງລັດຖະການ, ຈະມີການກະກຽມໄວເທົ່າທີ່ຈະໄວໄດ້ສຳລັບພິທີສາບານຕົນຂອງສະມາຊິກສະພາແຫ່ງຊາດທີ່ໄດ້ຮັບການເລືອກຕັ້ງໃໝ່; ຈາກນັ້ນ, ລັດຖະບານໃໝ່ຈະກ່າວຄຳສາບານຕົນ".

ວັນທີ 17 ກຸມພາ, ທາຣິກ ຣາມັນ ໄດ້ສາບານຕົນໃນພິທີທີ່ຈັດຂຶ້ນຢູ່ນອກອາຄານລັດຖະສະພາ ເພື່ອຮັບຕຳແໜ່ງນາຍົກລັດຖະມົນຕີຜູ້ໃໝ່ຂອງບັງກລາເທດຢ່າງເປັນທາງການເປັນຄົນທີ 11 ຂອງປະເທດ ຕໍ່ຈາກນາງ ເຊກ ຮາສິນາ ທີ່ຫຼົບໜີໄປລີ້ໄພຢູ່ຕ່າງປະເທດຫຼັງຈາກຖືກໂຄ່ນລົ້ມໂດຍການລຸກຮືຂຶ້ນຂອງປະຊາຊົນເມື່ອປີ 2024 ແລະ ມູຮຳໝັດຢູນູສ(Muhammad Yunus) ນັກເສດຖະສາດທີ່ໄດ້ຮັບລາງວັນໂນເບວ ເຊິ່ງເຂົ້າຮັບໜ້າທີ່ເປັນນາຍົກລັດຖະມົນຕີຮັກສາການ ໃນຖານະທີ່ປຶກສາ.

ຣາມັນ ອາຍຸ 60 ປີ, ປະທານພັກຊາດນິຍົມບັງກລາເທດ ແລະ ເປັນຜູ້ສືບທອດໜຶ່ງໃນຄອບຄົວການເມືອງທີ່ມີອິດທິພົນທີ່ສຸດຂອງປະເທດ ຈາກການເປັນລູກຂອງອະດີດນາຍົກລັດຖະມົນຕີ ນາງ ຄາເລດາ ເຊຍ (Khaleda Zia) ກ່າວໃນພິທີສາບານຕົນວ່າ "ໄຊຊະນະຄັ້ງນີ້ເປັນຂອງບັງກລາເທດ,ເປັນຂອງປະຊາທິປະໄຕ ແລະ ເປັນຂອງປະຊາຊົນທີ່ຍອມເສຍສະຫຼະເພື່ອສິ່ງນີ້"; ຂະນະດຽວກັນ, ກໍໃຫ້ຄຳໝັ້ນສັນຍາວ່າ ຈະຟື້ນຟູສະຖຽນລະພາບແລະການເຕີບໂຕໃຫ້ແກ່ບັງກລາເທດ ເຊິ່ງໄດ້ປະເຊີນກັບຄວາມວຸ້ນວາຍເປັນເວລາຫຼາຍເດືອນ ແລະ ທຳລາຍຄວາມເຊື່ອໝັ້ນຂອງນັກລົງທຶນຢ່າງໜັກໜ່ວງ. ຜູ້ນຳຄົນໃໝ່ຍອມຮັບວ່າຕ້ອງນຳພາປະເທດເດີນບົນເສັ້ນທາງທີ່ທ້າທາຍໃນ "ເສັ້ນທາງໃໝ່".

ທ່າມກາງສະຖານະການທີ່ເສດຖະກິດບອບບາງ, ສະຖາບັນຕາມລັດຖະທຳມະນູນອ່ອນແອແລະສະຖານະການກົດໝາຍບ້ານເມືອງທີ່ເສື່ອມລົງ, ການກ້າວຂຶ້ນສູ່ຈຸດສູງສຸດທາງການເມືອງຂອງ ຣາມັນ ໄດ້ຖືກວິເຄາະວ່າເປັນ"ເສັ້ນທາງມະຫັດສະຈັນ" ເນື່ອງຈາກຫາກໍເດີນທາງກັບຄືນບັງກລາເທດເມື່ອເດືອນທັນວາປີຜ່ານມາ ຫຼັງຈາກລີ້ໄພຢູ່ໃນສະຫະລາຊະອານາຈັກ (ອັງກິດ) ດົນເຖິງ 17 ປີ.



# ຄະນະກຳມະການເລືອກຕັ້ງແຫ່ງຊາດຫວຽດນາມ ປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ຊຸດທີ XVI 864 ຄົນ




(Xinhua)-ວັນອາທິດທີ 15 ກຸມພາຜ່ານມາ, ຄະນະກຳມະການເລືອກຕັ້ງແຫ່ງຊາດຫວຽດນາມ ໄດ້ປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ XVI ຈຳນວນ 864 ຄົນ, ຜູ້ສະໝັກເຫຼົ່ານີ້ຈະໄດ້ຮັບການລົງຄະແນນສຽງໃນ 182 ເຂດເລືອກຕັ້ງທົ່ວປະເທດ ເພື່ອເລືອກເອົາ ສສຊ 500 ຄົນ ສຳລັບອາຍຸການ 5 ປີ (2026-2031).

ຫຼັງຈາກການປະກາດ, ຜູ້ສະໝັກຮັບເລືອກຕັ້ງ ຈະເລີ່ມຕົ້ນການໂຄສະນາຫາສຽງຜ່ານກອງປະຊຸມ ແລະ ການພົບປະກັບຜູ້ມີສິດເລືອກຕັ້ງ ຫຼື ຜ່ານສື່ມວນຊົນ ເພື່ອນຳສະເໜີແຜນງານຂອງຕົນ.

ການເລືອກຕັ້ງສະພາແຫ່ງຊາດ ຊຸດທີ XVI ແລະ ສະມາຊິກສະພາປະຊາຊົນທຸກຂັ້ນ ສຳລັບອາຍຸການ 5 ປີ ຈະຈັດຂຶ້ນໃນວັນອາທິດທີ15ມີນາ2026.

# ສິງກະໂປ ຈະອອກກົດໝາຍຄວບຄຸມ "ກ່ອງສຸ່ມ", ບັງຄັບເປີດອັດຕາ "ໂອກາດຊະນະ"



(Straitstimes) - ລັດຖະບານສິງກະໂປ ກຳລັງຮ່າງກົດໝາຍເພື່ອຄວບຄຸມ "ກ່ອງສຸ່ມ" (blind box) ຫຼັງຈາກມີຄວາມກັງວົນວ່າຈະເປັນ "ການພະນັນແອບແຝງ", ກຽມບັງຄັບໃຫ້ຜູ້ຜະລິດ ເປີດເຜີຍໂອກາດໄດ້ຮັບສິນຄ້າຢ່າງລະອຽດ ໂດຍມີຈຸດປະສົງເພື່ອສ້າງມາດຕະຖານໃໝ່ເພື່ອປົກປ້ອງຜູ້ບໍລິໂພກ ແລະ ເຍົາວະຊົນ ຈາກການຕະຫຼາດແບບລ່າເຫຍື່ອ.

ວັນທີ 12 ກຸມພາຜ່ານມາ, ເຄ. ຊັນມູກຳ (K. Shanmugam) ລັດຖະມົນຕີກະຊວງພາຍໃນຂອງສິງກະໂປ ກ່າວວ່າ ລັດຖະບານກຳລັງພິຈາລະນາກົດໝາຍທີ່ຈະບັງຄັບໃຫ້ຜະລິດຕະພັນກ່ອງສຸ່ມ ຕ້ອງ "ເປີດເຜີຍອັດຕາຄວາມເປັນໄປໄດ້" ໃນການໄດ້ຮັບສິນຄ້າແຕ່ລະລາຍການຢ່າງຊັດເຈນ ເຊິ່ງອົງການທີ່ກ່ຽວຂ້ອງທັງໝົດ ກຳລັງຮ່ວມກັນຮ່າງກົດໝາຍ;ເຂົາກ່າວອີກວ່າ ຂໍ້ສະເໜີຈາກສະມາຊິກລັດຖະສະພາ ທີ່ຕ້ອງການໃຫ້ມີມາດຕະຖານການເປີດເຜີຍໂອກາດ ຫຼື ຄວາມເປັນໄປໄດ້ທີ່ຜູ້ບໍລິໂພກຈະເປັນ "ຝ່າຍຊະນະ"ໃນການເລືອກກ່ອງສຸ່ມຈະເປັນໜຶ່ງໃນປະເດັນຕົ້ນຕໍທີ່ຖືກນຳມາພິຈາລະນາໃນຮ່າງກົດໝາຍໃໝ່ດ້ວຍ.

"ກ່ອງສຸ່ມ" ແມ່ນຜະລິດຕະພັນຂາຍຍ່ອຍເຊິ່ງມັກຈະເປັນຂອງຫຼິ້ນ ຫຼື ສິ່ງຂອງສະສົມ ທີ່ບັນຈຸໃນຫີບຫໍ່ປິດໄວ້ ໂດຍບໍ່ເປີດເຜີຍສິນຄ້າພາຍໃນຈົນກວ່າຈະມີການຊື້ ແລະ ເປີດກ່ອງ ເຊິ່ງບັນດານັກເຄື່ອນໄຫວສິດທິຜູ້ບໍລິໂພກແລະຜູ້ກຳນົດນະໂຍບາຍຕ່າງມີຄວາມກັງວົນວ່າຮູບແບບນີ້ ມີຄວາມຄ້າຍຄືກັບການພະນັນ ໂດຍສະເພາະເມື່ອຜູ້ຊື້ຕ້ອງຈ່າຍເງິນເພື່ອໂອກາດທີ່ຈະຊະນະສິນຄ້າທີ່ມີມູນຄ່າສູງຫຼືຫາຍາກ. ປັດຈຸບັນ, ກ່ອງສຸ່ມໄດ້ຮັບຄວາມນິຍົມຢ່າງສູງທັງໃນຮ້ານຂາຍເຄື່ອງຫຼິ້ນ ແລະ ຕະຫຼາດອອນລາຍ;ເຖິງວ່າແຟນໆ(fanclub) ມັກຄວາມຕື່ນເຕັ້ນນີ້, ແຕ່ອົງການຄຸ້ມຄອງ ແລະ ນັກວິຈານຊີ້ວ່ານີ້ຄື"ການຕະຫຼາດແບບລ່າເຫຍື່ອ" ທີ່ເຮັດໃຫ້ເສັ້ນແບ່ງລະຫວ່າງການຊື້ເຄື່ອງກັບການພະນັນ ຈາງຫາຍໄປ ໂດຍມີຄວາມກັງວົນເປັນພິເສດສຳລັບເຍົາວະຊົນ ເຊິ່ງຖືເປັນກຸ່ມທີ່ມີຄວາມສ່ຽງ ແລະ ອ່ອນໄຫວຕໍ່ກັບຍຸດການຕະຫຼາດລັກສະນະນີ້ຫຼາຍທີ່ສຸດ.

# Nigeria ກຳນົດຕາຕະລາງສຳລັບ ການເລືອກຕັ້ງທົ່ວໄປປີ 2027



(Xinhua) - ຄະນະກຳມະການເລືອກຕັ້ງແຫ່ງຊາດເອກະລາດ (Independent National Electoral Commission - INEC) ຂອງນິເຊຣີ ກ່າວວ່າ ການເລືອກຕັ້ງປະທານາທິບໍດີຄັ້ງຕໍ່ໄປ ຈະຈັດຂຶ້ນໃນຕົ້ນປີ 2027, ຂະນະທີ່ປະເທດທີ່ມີປະຊາກອນຫຼາຍທີ່ສຸດໃນທະວີບອາຟຣິກາ ເລີ່ມກະກຽມສຳລັບການເລືອກຕັ້ງທົ່ວໄປ.

ອີງຕາມຕາຕະລາງການເລືອກຕັ້ງທີ່ INEC ປະກາດເມື່ອວັນສຸກທີ 13 ກຸມພາຜ່ານມາ, ການເລືອກຕັ້ງປະທານາທິບໍດີ ແລະ ສະພາແຫ່ງຊາດ ມີກຳນົດຈັດຂຶ້ນໃນວັນທີ 20 ກຸມພາ 2027; ສ່ວນການເລືອກຕັ້ງຜູ້ວ່າການລັດແລະສະພາແຫ່ງລັດຈະຕາມມາໃນວັນທີ 6 ມີນາ 2027.

ການເລືອກຕັ້ງຂັ້ນຕົ້ນຂອງພັກການເມືອງ ລວມທັງການແກ້ໄຂຂໍ້ຂັດແຍ້ງທີ່ເກີດຂຶ້ນຈາກບັນຫາເຫຼົ່ານັ້ນ ຄາດວ່າຈະເກີດຂຶ້ນລະຫວ່າງວັນທີ 22 ພຶດສະພາ ຫາ 20 ມິຖຸນາ 2026; ພັກການເມືອງຈະຍື່ນແບບຟອມສະເໜີຊື່ຜູ້ສະໝັກຜ່ານເວັບໄຊອອນລາຍຂອງ INEC ສຳລັບການເລືອກຕັ້ງລະດັບຊາດ ຈະເປີດໃນວັນທີ 14 ກໍລະກົດແລະປິດໃນວັນທີ 28 ກໍລະກົດປີນີ້.

ການໂຄສະນາຫາສຽງເລືອກຕັ້ງປະທານາທິບໍດີ ແລະ ສະພາແຫ່ງຊາດ ຈະເລີ່ມຕົ້ນໃນວັນທີ 23 ກັນຍາ 2026 ແລະ ສິ້ນສຸດໃນວັນທີ 18 ກຸມພາ 2027, ການໂຄສະນາຫາສຽງເລືອກຕັ້ງຜູ້ວ່າການລັດແລະສະພາຜູ້ແທນປະຊາຊົນປະຈຳລັດ ຈະເລີ່ມໃນວັນທີ 7 ຕຸລາ 2026 ແລະ ສິ້ນສຸດໃນວັນທີ 4 ມີນາ 2027.

ການເລືອກຕັ້ງຜູ້ວ່າການລັດ ຈະບໍ່ຈັດຂຶ້ນໃນ 8 ລັດ ຈາກທັງໝົດ 36 ລັດຂອງນິເຊຣີ ໃນປີໜ້າ, ເນື່ອງຈາກມີການເລືອກຕັ້ງນອກຮອບໃນລັດ Anambra, Bayelsa, Edo, Ekiti, Imo, Kogi, Ondo ແລະ Osun; ໃນຂະນະດຽວກັນ, ນະຄອນຫຼວງອາບູຈາ (Abuja) ແມ່ນຢູ່ພາຍໃຕ້ການບໍລິຫານຂອງລັດຖະມົນຕີທີ່ໄດ້ຮັບການແຕ່ງຕັ້ງໂດຍປະທານາທິບໍດີ, ອີງຕາມລັດຖະທຳມະນູນຂອງປະເທດ.

## ລາຍງານ...

ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ຄະນະກຳມະການເລືອກຕັ້ງລະດັບຊາດ ທັງເປັນຮອງຫົວໜ້າອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ໂດຍມີພາກສ່ວນກ່ຽວຂ້ອງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ມີຄຳເຫັນວ່າ: ຈຸດປະສົງຂອງກອງປະຊຸມຄັ້ງນີ້ ກໍເພື່ອຮັບຟັງການລາຍງານຂອງແຕ່ລະຄະນະໃນອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນທີ່ລົງເຄື່ອນໄຫວຕິດຕາມ, ຊຸກຍູ້ວຽກງານທີ່ກຳນົດເຂົ້າໃນການຮັບໃຊ້ໃຫ້ແກ່ການເລືອກຕັ້ງທີ່ຈະຈັດຂຶ້ນໃນວັນອາທິດທີ 22 ກຸມພາ 2026 ເພື່ອພ້ອມກັນສະຫຼຸບຕີລາຄາການຕິດຕາມ, ຊຸກຍູ້ວຽກງານດັ່ງກ່າວຕາມຄຳແນະນຳກ່ຽວກັບການໂຄສະນາ, ປຸກລະດົມຂະບວນການ ແລະ ການໂຄສະນາຫາສຽງພ້ອມທັງສະເໜີໃຫ້ແຕ່ລະຄະນະລາຍງານຜົນການລົງໄປຕິດຕາມຢູ່ແຕ່ທ້ອງຖິ່ນ.

ຈາກນັ້ນ, ຕາງໜ້າໃຫ້ແຕ່ລະຄະນະກໍໄດ້ລາຍງານໂດຍຫຍໍ້ສະພາບຄວາມເປັນຈິງການລົງເຄື່ອນໄຫວຕິດຕາມ, ຊຸກຍູ້ວຽກງານໂຄສະນາ, ປຸກລະດົມຂະບວນການ ແລະ ການໂຄສະນາຫາສຽງຢູ່ແຕ່ລະທ້ອງຖິ່ນ; ຂໍ້ສະດວກ, ຂໍ້ຫຍຸ້ງຍາກແລະການແກ້ໄຂໃນຕໍ່ໜ້າ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຂອງຄະນະຮັບຜິດຊອບການເລືອກຕັ້ງ; ຜົນໄດ້ຮັບຂອງການເຄື່ອນໄຫວຕິດຕາມ, ຊຸກຍູ້ແລະອື່ນໆ.

ໃນຕອນທ້າຍ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ມີຄຳເຫັນສະຫຼຸບສັງລວມເນື້ອໃນຂອງກອງປະຊຸມ ພ້ອມທັງເນັ້ນໃຫ້ບັນດາທ່ານໃນອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ຈົ່ງພ້ອມກັນເອົາໃຈໃສ່ຢ່າງຕັ້ງໜ້າ ແລະ ດ້ວຍຄວາມຮັບຜິດຊອບສູງ ຕໍ່ວຽກງານທີ່ຕົນຮັບຜິດຊອບແນໃສ່ເຮັດໃຫ້ບັ້ນເລືອກຕັ້ງຄັ້ງນີ້ໃຫ້ບັນລຸຜົນສຳເລັດຕາມສີ່ລະດັບຄາດໝາຍໃນມະຕິກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຄື: 1) ນຳພາຜູ້ມີສິດເລືອກຕັ້ງ ໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ 100%, 2) ນຳພາຜູ້ມີສິດເລືອກຕັ້ງ ໃຫ້ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງ ຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, 3) ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພ 100% ແລະ 4) ນຳພາວຽກງານປ່ອນບັດເລືອກຕັ້ງໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ 100%.



## ສຳເລັດ...

(ຕໍ່ຈາກໜ້າ 11)

ການເມືອງສູນກາງພັກ, ນາຍົກລັດຖະມົນຕີ ໄດ້ສຳເລັດການລົງໂຄສະນາຫາສຽງ ແລະ ສະເໜີຕົວຕໍ່ຜູ້ມີສິດເລືອກຕັ້ງຢູ່ບັນດາເມືອງແລະຈຸດພົບປະຕ່າງໆພາຍໃນແຂວງ ເປັນຕົ້ນ: ສຳນັກງານປົກຄອງເມືອງຊະນະສົມບູນ, ບ້ານກົກເດື່ອ ນະຄອນປາກເຊ, ບ້ານໜອງຜຳ ແລະ ບ້ານດອນຕະລາດ ເມືອງຈຳປາສັກ, ບ້ານນາພັນວົງ ແລະ ບ້ານຫາດສາມປາງ ເມືອງສຸຂຸມາ, ບ້ານດູ່ ແລະ ບ້ານອຸປະຫຼາດ ເມືອງໂພນທອງ, ຈຸດບ້ານມ່ວງ ເມືອງປະທຸມພອນ, ຈຸດບ້ານໜອງບົວໃຫຍ່ (ລວມ 8 ບ້ານອ້ອມຂ້າງ) ເມືອງປະທຸມພອນ, ບ້ານຂະເໜົາໂພນຈຳປາ ແລະ ຫ້ອງວ່າການປົກຄອງເມືອງໂຂງ, ຈຸດບ້ານສະພັງເໜືອ ແລະ ບ້ານນາດີເມືອງມູນລະປາໂມກ; ໃນແຕ່ລະຈຸດ, ຜູ້ສະໝັກໄດ້ຜັດປ່ຽນກັນສະເໜີປະຫວັດຫຍໍ້, ຜົນງານ ແລະ ວິໄສທັດຂອງຕົນ ໂດຍເນັ້ນໜັກຈະປະຕິບັດພາລະບົດບາດເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ເພື່ອພັດທະນາຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນໃຫ້ດີຂຶ້ນເລື້ອຍໆ.

ໂອກາດນີ້, ທ່ານນາຍົກລັດຖະມົນຕີ ໄດ້ເນັ້ນໜັກໃຫ້ເຫັນເຖິງຄວາມໝາຍສຳຄັນຂອງການເລືອກຕັ້ງ ເຊິ່ງເປັນການຜັນຂະຫຍາຍລະບອບປະຊາທິປະໄຕປະຊາຊົນເພື່ອສ້າງຕັ້ງລະບົບອຳນາດລັດທີ່ເຂັ້ມແຂງ, ໂປ່ງໃສ ແລະ ຮັບໃຊ້ຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ; ພ້ອມທັງຮຽກຮ້ອງໃຫ້ຜູ້ມີສິດເລືອກຕັ້ງໄປໃຊ້ສິດປ່ອນບັດໃນວັນອາທິດທີ 22 ກຸມພາທີ່ຈະມາເຖິງນີ້ ໃຫ້ກາຍເປັນປາງບຸນໃຫຍ່ຂອງຊາດ ທັງຮັບປະກັນໃຫ້ການເລືອກຕັ້ງດຳເນີນໄປຢ່າງມີປະສິດທິຜົນສູງສຸດຕາມຄາດໝາຍ 400% ຄື: 1) ນຳພາຜູ້ມີສິດເລືອກຕັ້ງ ໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ 100%, 2) ນຳພາຜູ້ມີສິດເລືອກຕັ້ງ ໃຫ້ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງ ຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, 3) ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບແລະມີຄວາມປອດໄພ 100% ແລະ 4) ນຳພາວຽກງານປ່ອນບັດເລືອກຕັ້ງ ໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ 100%.

**(ອານຸສອນ ພູມມີທອນ)**




## ການໂຄສະນາ...

(ຕໍ່ຈາກໜ້າ 1)

ຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ ພ້ອມດ້ວຍຜູ້ມີສິດເລືອກຕັ້ງເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ມີຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຈຳນວນ 10 ທ່ານ ຍິງ 3 ທ່ານ, ເລືອກເອົາ 7 ທ່ານ ເຊິ່ງເພດຍິງກວມເອົາ 30%, ມາຈາກສູນກາງ 2 ທ່ານ, ມາຈາກແຂວງ 8 ທ່ານ ຍິງ 3 ທ່ານ ທີ່ເປັນຕົວແທນຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ກຳລັງປ້ອງກັນຊາດ; ທົ່ວແຂວງມີ 432 ໜ່ວຍປ່ອນບັດ, ມີຈຳນວນພົນລະເມືອງ 613,848 ຄົນ ຍິງ 170,177 ຄົນ ແລະ ຜູ້ມີສິດປ່ອນບັດເລືອກຕັ້ງ ມີ 172,780 ຄົນ ຍິງ 82,797 ຄົນ.

ບັນດາທ່ານຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ໄດ້ຜັດປ່ຽນກັນສະເໜີຕົວ ນັບແຕ່ນ້ຳເບີ 1-10 ຕາມລຳດັບ ແລະ ເປີດໂອກາດໃຫ້ຜູ້ມີສິດເລືອກຕັ້ງ ມີຄຳຄິດຄຳເຫັນ ແລະ ຄຳສະເໜີຕ່າງໆ; ຈາກນັ້ນ, ຜູ້ສະໝັກຮັບເລືອກຕັ້ງ ກໍຮັບເອົາຄຳສະເໜີ ພ້ອມທັງຮຽກຮ້ອງໃຫ້ຜູ້ມີສິດເລືອກຕັ້ງ ຈົ່ງພ້ອມກັນໄປໃຊ້ສິດຂອງຕົນໃນການເລືອກຕັ້ງໃນວັນອາທິດທີ 22 ກຸມພາທີ່ຈະມາເຖິງນີ້ ໃຫ້ບັນລຸຜົນສຳເລັດຕາມສີ່ລະດັບຄາດໝາຍໃນມະຕິກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຄື: 1) ນຳພາຜູ້ມີສິດເລືອກຕັ້ງ ໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ 100%, 2) ນຳພາຜູ້ມີສິດເລືອກຕັ້ງ ໃຫ້ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, 3) ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພ 100% ແລະ 4) ນຳພາວຽກງານປ່ອນບັດເລືອກຕັ້ງໃຫ້ຮັບປະກັນຄວາມໂປ່ງໃສແລະສຳເລັດທັນຕາມກຳນົດເວລາ 100%.

**(ນາງ ອາລິນ ສຸພົມມະປະດິດ)**

## ເຝົ້າໄວ້ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

# ຈັບມືກັນຕ້ານ ການສໍ້ໂກງທາງອອນລາຍ

ໃນໄລຍະຫຼັງມານີ້, ກະແສຂ່າວຂອງບາງປະເທດທີ່ຢູ່ໄດ້ດ້ວຍການບິດເບືອນຄວາມຈິງ ໄດ້ໂຄສະນາໃສ່ຮ້າຍປ້າຍສີກຳປູເຈຍ ວ່າເປັນແດນສະແກມເມີ, ໝາຍຄວາມວ່າ ເປັນເຮືອນຢູ່ອູ່ນອນຂອງກຸ່ມແກ໊ງຕົ້ມຕຸ໋ນປອກລອກທາງອິນເຕີເນັດ ຈົນເຮັດໃຫ້ພວກຫູເບົາເອົາງ່າຍຫຼົງເຊື່ອ ແລະ ເຫັນກຳປູເຈຍ ເປັນຕົ້ນກຳເນີດຂອງປາກົດການຫຍໍ້ທໍ້ດັ່ງກ່າວ; ແຕ່ໃນຕົວຈິງແລ້ວ ທາງການກຳປູເຈຍ ຍາມໃດກໍໄດ້ໃຊ້ທຸກຄວາມພະຍາຍາມເພື່ອກຳຈັດຂະບວນການຫຼອກລວງຕົ້ມຕຸ໋ນ, ການຄ້າມະນຸດໃນຮູບການຕ່າງໆຕະຫຼອດມາ ແລະ ໄດ້ຮັບຜົນສຳເລັດເປັນຢ່າງດີ. ກຳປູເຈຍ ຕັ້ງໜ້າຈັບມືກັບບັນດາປະເທດໃນອາຊຽນ ແລະ ນອກອາຊຽນ; ຕົວຢ່າງ: ມີຂ່າວໜຶ່ງທີ່ເຜີຍໃຫ້ຮູ້ຫວ່າງບໍ່ເຫິງມານີ້ວ່າ ກຳປູເຈຍ ແລະ ສ.ເກົາຫຼີ ຈັບມືກັນຕ້ານການສໍ້ໂກງທາງອອນລາຍໂດຍຈະມີການສ້າງບົດບັນທຶກຄວາມເຂົ້າໃຈລະຫວ່າງສອງຝ່າຍທີ່ເນັ້ນການຮ່ວມມືຕ້ານການສໍ້ໂກງທາງອອນລາຍ, ການລັກພາຕົວ, ການກັກຂັງ ກໍຄືອາຊະຍາກຳອື່ນໆ ທີ່ແນໃສ່ຊາວເກົາຫຼີໃນກຳປູເຈຍ ໃນເດືອນຕຸລາປີຜ່ານມາ. ກຳປູເຈຍ ໄດ້ຈັດສົ່ງຊາວ ສ.ເກົາຫຼີ ຈຳນວນ 64 ຄົນ ທີ່ຖືກສົງໄສວ່າມີສ່ວນກ່ຽວຂ້ອງກັບການສໍ້ໂກງທາງອອນລາຍກັບຄືນປະເທດ; ສ່ວນແຜນການຂອງກຳປູເຈຍ ໃນການປາບປາມກຸ່ມແກ໊ງສໍ້ໂກງດັ່ງກ່າວນີ້ ຈະເນັ້ນຂະບວນການສືບສວນໃຫ້ກວ້າງຂວາງ ເພື່ອລະບຸໃຫ້ໄດ້ຜູ້ຢູ່ເບື້ອງຫຼັງ ແລະ ເຄືອຂ່າຍອາຊະຍາກຳ ທີ່ວາງແຜນສໍ້ໂກງທາງອອນລາຍ ລວມທັງລະບົບໝູນວຽນຂອງການເງິນທີ່ກ່ຽວຂ້ອງ.

ອີກຂ່າວໜຶ່ງທີ່ມີເນື້ອໃນຄ້າຍໆກັນ ແລະ ອອກມາໃນໄລຍະດຽວກັນ ກໍຄືເລື່ອງສະຫະພາບເອີຣົບ (EU) ໄດ້ໃຫ້ສັດຕະຍາບັນສົນທິສັນຍາສະຫະປະຊາຊາດຕ້ານອາຊະຍາກຳທາງອິນເຕີເນັດ; ເມື່ອ EU ໄດ້ໃຫ້ສັດຕະຍາບັນແລ້ວ, ສົນທິສັນຍາດັ່ງກ່າວ ກໍຈະຖືກຮັບຮອງເອົາໂດຍບັນດາປະເທດສະມາຊິກ EU ທັງໝົດໂດຍອັດຕະໂນມັດ. ການເປີດພິທີເຊັນຮັບຮອງເອົາສົນທິສັນຍາດັ່ງກ່າວນັ້ນ ມີຂຶ້ນລະຫວ່າງວັນທີ 25-26 ຕຸລາ 2025 ທີ່ນະຄອນຫຼວງຮ່າໂນ້ຍ, ປະເທດຫວຽດນາມ. ປະທານສະພາ EU ມີຄຳເຫັນວ່າ ການເຊັນຮັບຮອງເອົາສົນທິສັນຍາດັ່ງກ່າວ ຈະຊ່ວຍໃຫ້ EU ມີເຄື່ອງມືທາງກົດໝາຍເພື່ອຕໍ່ສູ້ຕ້ານອາຊະຍາກຳສໍ້ໂກງທາງເຕັກໂນໂລຊີຂໍ້ມູນຂ່າວສານ, ອາຊະຍາກຳທາງໄຊເບີ (ການໂຈມຕີທາງອິນເຕີເນັດ), ການສວຍໃຊ້ແລະການສະແຫວງຫາຜົນປະໂຫຍດທາງເພດກັບເດັກນ້ອຍທາງອິນເຕີເນັດ.

ເພີ່ມອາຍຸຂອງຜູ້ສາມາດບໍລິຈາກເລືອດຢູ່ປະເທດສິງກະໂປ ມີລະບຽບກ່ຽວກັບການບໍລິຈາກເລືອດທີ່ລະອຽດລະອໍທີ່ສຸດ. ເລີ່ມແຕ່ວັນທີ 2 ມັງກອນປີນີ້ ລະບຽບການສະບັບໃໝ່ກ່ຽວກັບການບໍລິຈາກເລືອດ ໄດ້ເລີ່ມມີຜົນສັກສິດ ຄືໄດ້ເພີ່ມອາຍຸສູງສຸດຂອງຜູ້ບໍລິຈາກເລືອດຄັ້ງທຳອິດ ຈາກ 60 ປີ ເປັນ 65 ປີ, ໝາຍຄວາມວ່າໃນເມື່ອກ່ອນນັ້ນ ຜູ້ທີ່ບໍລິຈາກເລືອດເປັນຄັ້ງທຳອິດໃນຊີວິດ ຕ້ອງມີອາຍຸບໍ່ເກີນ 60 ປີ; ແຕ່ພາຍໃຕ້ລະບຽບການໃໝ່ນີ້ ສາມາດບໍລິຈາກເລືອດຄັ້ງທຳອິດ ໃນເກນອາຍຸບໍ່ເກີນ 65 ປີ ໝາຍຄວາມວ່າຮອດ 1 ວັນກ່ອນອາຍຸ 66 ປີ, ສຳລັບຜູ້ທີ່ເຄີຍບໍລິຈາກເລືອດເປັນປົກກະຕິ (ບໍ່ແມ່ນຄັ້ງທຳອິດ) ນັ້ນສາມາດສືບຕໍ່ບໍລິຈາກເລືອດຮອດອາຍຸ 75 ປີ. ການເພີ່ມອາຍຸສູງສຸດ ສຳລັບຜູ້ບໍລິຈາກເລືອດແມ່ນເພື່ອຮັບປະກັນບໍລິມາດເລືອດໃຫ້ພຽງພໍກັບຄວາມຕ້ອງການຂອງສັງຄົມສິງກະໂປ, ພ້ອມດຽວກັນ ກໍເພື່ອຮັບປະກັນສຸຂະພາບຂອງຜູ້ບໍລິຈາກເລືອດເອງ.

## ທັມມະພາສາ ຜ່ານສຽງຫົວ

**# ບ່າວກະບື**

**ຜູ້ບ່າວ:** "ອ້າຍຈະແຕ່ງດອງກັບແມ່ຍິງທີ່ຮູ້ວຽກຢ້າວການເຮືອນດີ, ສະຫງ່ຽມຄ່ຽມຄົມ ແລະ ຄົວກິນເກັ່ງ".

**ຜູ້ສາວ:** "ຄັນຊັ້ນ ນ້ອງຈະແນະນຳອ້າຍໃຫ້ຮູ້ຈັກກັບສາວໃຊ້ປະຈຳເຮືອນນ້ອງ, ລາວມີຄຸນລັກສະນະຄົບ 3 ຢ່າງຕາມທີ່ອ້າຍຕ້ອງການ".

**# BAOKBU**

**BOY:** "I will marry the girl who is an expert home-maker, simple and a good cook".

**GIRL:** "Then I'll Introduce you to my house-maid who posesses all these 3 qualities".

ທະນາຄານພັດທະນາລາວ
LDB Bank



## ໂຄສະນາ...

(ຕໍ່ຈາກໜ້າ 1)

(ສພຊ) - ເພື່ອຮັບປະກັນໃຫ້ແກ່ການໂຄສະນາຫາສຽງຂອງຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ(ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ຮັບຜົນດີ, ມີຄວາມເປັນເອກະພາບ ທັງຮັບປະກັນການນຳພາຂອງພັກ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ສະພາບຄວາມເປັນຈິງຂອງແຂວງ; ເພື່ອສຶກສາອົບຮົມໃຫ້ຜູ້ມີສິດປ່ອນບັດເລືອກຕັ້ງ ຮັບຮູ້ ແລະ ເຂົ້າໃຈແຈ້ງຕື່ມກ່ຽວກັບຄວາມໝາຍຄວາມສຳຄັນຂອງການເລືອກຕັ້ງ ແນໃສ່ເຊີດຊູລະດັບຄວາມຕື່ນຕົວທາງດ້ານການເມືອງຂອງປະຊາຊົນບັນດາເຜົ່າແລະຮັບປະກັນການປະຕິບັດສິດເປັນເຈົ້າຂອງປະເທດຊາດຂອງພົນລະເມືອງ ໃນການໄປໃຊ້ສິດປ່ອນບັດເລືອກຕັ້ງເອົາເອົາຜູ້ແທນ ຖືກຕ້ອງຕາມລະບຽບຫຼັກການ; ເຮັດໃຫ້ຜູ້ມີສິດເລືອກຕັ້ງ ໄດ້ຮູ້ໄດ້ເຫັນຜູ້ສະໝັກຮັບເລືອກຕັ້ງ ແລະ ກໍາໄດ້ຊີວະປະຫວັດ, ຄຸນສົມບັດ, ຄວາມຮູ້ຄວາມສາມາດ, ທັດສະນະ ແລະ ການເຄື່ອນໄຫວວຽກງານຂອງຜູ້ສະໝັກຮັບເລືອກຕັ້ງ ແລ້ວໃຊ້ສິດພື້ນຖານຂອງຕົນເພື່ອເລືອກເອົາບຸກຄົນທີ່ມີມາດຕະຖານເງື່ອນໄຂຖືກຕ້ອງແລະຄົບຖ້ວນເຂົ້າເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນຢ່າງແທ້ຈິງ; ເພື່ອໃຫ້ຜູ້ສະໝັກຮັບເລືອກຕັ້ງໄດ້ຮັບຮູ້ກ່ຽວກັບຄວາມມຸ່ງມາດປາຖະໜາແລະສະພາບການດຳລົງຊີວິດຂອງປະຊາຊົນບັນດາເຜົ່າໃນເຂດເລືອກຕັ້ງຂອງຕົນ ແລະ ໄດ້ພົວພັນສະໜິດແໜ້ນກັບປະຊາຊົນຢູ່ໃນທ້ອງຖິ່ນທີ່ຕົນລົງສະໝັກຮັບເລືອກຕັ້ງ.

ລະຫວ່າງວັນທີ 16-17 ກຸມພານີ້, ທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນພ້ອມດ້ວຍຄະນະໄດ້ສືບຕໍ່ນຳພາຜູ້ຮັບສະໝັກເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ຊຸດທີ X ຈຳນວນ 5 ທ່ານ ຍິງ 2 ທ່ານ (ຈາກທັງໝົດ 14 ທ່ານ) ແລະ ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງແຂວງວຽງຈັນປະຈຳເຂດເລືອກຕັ້ງເມືອງທຸລະຄົມ ແລະ ເມືອງແກ້ວອຸດົມ ຊຸດທີ V ໄດ້ສືບຕໍ່ລົງໂຄສະນາຫາສຽງ ແລະ ສະເໜີຕົວຕໍ່ຜູ້ມີສິດເລືອກຕັ້ງຢູ່ບ້ານແຈ້ງ ເມືອງທຸລະຄົມ ແລະ ເມືອງແກ້ວອຸດົມ 2 ຈຸດ: ບ້ານທ່າລາດ ແລະ ສະໂມສອນໃຫຍ່ຂອງເມືອງ.

ໃນການໂຄສະນາຫາສຽງ, ຜູ້ຮັບສະໝັກຮັບເລືອກຕັ້ງ ໄດ້ຜັດປ່ຽນກັນສະເໜີຊື່ ແລະ ປະຫວັດການເຄື່ອນໄຫວຂອງຕົນໃນແຕ່ລະໄລຍະ ພ້ອມທັງຍົກໃຫ້ເຫັນຄວາມໝາຍຄວາມສຳຄັນ, ພາລະບົດບາດ, ສິດແລະໜ້າທີ່ ຂອງ ສສຊ ແລະ ສສຂ ເພື່ອເປັນການສະໜອງຂໍ້ມູນຂ່າວສານຕົວຈິງ, ເປັນການແນະນຳໃຫ້ຜູ້ມີສິດເລືອກຕັ້ງ ຮັບຮູ້ເຂົ້າໃຈຢ່າງຖືກຕ້ອງຕໍ່ຜູ້ສະໝັກຮັບເລືອກຕັ້ງແຕ່ລະທ່ານ ທັງເປັນບ່ອນອີງໃນການຄົ້ນຄວ້າ, ຄົ້ນຄິດ ສົມທຽບໃສ່ມາດຕະຖານ ເພື່ອຕັດສິນໃຈເລືອກເອົາຜູ້ທີ່ຕົນເຫັນວ່າມີມາດຕະຖານກວ່າໝູ່ ເພື່ອເປັນຕົວແທນຂອງຕົນໄປປະຕິບັດສິດ, ອຳນາດຂອງປະຊາຊົນບັນດາເຜົ່າຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ; ພ້ອມນັ້ນ, ຍັງຮຽກຮ້ອງໃຫ້ຜູ້ມີສິດເລືອກຕັ້ງ ຈົ່ງໄດ້ຮ່ວມຈິດຮ່ວມໃຈເຂົ້າຮ່ວມຂະບວນການເລືອກຕັ້ງຄັ້ງນີ້ ໃຫ້ກາຍເປັນປາງບຸນໃຫຍ່ຂອງຊາດ, ເລືອກໄດ້ຜູ້ສະໝັກທີ່ມີມາດຕະຖານເງື່ອນໄຂຄົບຖ້ວນ, ມີຄວາມຮູ້ຄວາມສາມາດ, ມີວິໄສທັດທີ່ກວ້າງໄກ ເພື່ອມາເປັນຕົວແທນປະຊາຊົນເຂົ້າໄປຢູ່ໃນສະພາ. ພ້ອມດຽວກັນນັ້ນ, ຕາງໜ້າຄະນະ ຍັງໄດ້ຜ່ານຊື່, ປະຫວັດ ແລະ ຂໍ້ມູນສຳຄັນຕ່າງໆ ຂອງຜູ້ສະໝັກທ່ານອື່ນ ທີ່ໄດ້ແບ່ງກຸ່ມລົງເຄື່ອນໄຫວໃນແຕ່ລະຈຸດ ເພື່ອຮັບປະກັນໃຫ້ຜູ້ມີສິດປ່ອນບັດເລືອກຕັ້ງໄດ້ຮັບຮູ້ຂໍ້ມູນຂອງຜູ້ສະໝັກຢ່າງຄົບຖ້ວນ ແລະ ໂປ່ງໃສ ກ່ອນການຕັດສິນໃຈປ່ອນບັດເລືອກຕັ້ງ.

ເຂດເລືອກຕັ້ງທີ 10 ແຂວງວຽງຈັນ ມີຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຈຳນວນ 14 ທ່ານ ຍິງ 5 ທ່ານ, ເລືອກເອົາ 10 ທ່ານ; ມີຕົວແທນຈາກເຜົ່າລາວ 11 ທ່ານ, ເຜົ່າກຶມມຸ 1 ທ່ານ, ເຜົ່າມົ້ງ 2 ທ່ານ; ມາຈາກສູນກາງ 5 ທ່ານ ຍິງ 2 ທ່ານ, ມາຈາກແຂວງ 9 ທ່ານ ຍິງ 3 ທ່ານ ທີ່ເປັນຕົວແທນຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ກຳລັງປ້ອງກັນຊາດ; ອາຍຸກະສຽນລະຫວ່າງ 46-55 ປີ ກວມເອົາ 50%, 56-60 ປີ ກວມເອົາ 42.8%, 60 ປີຂຶ້ນໄປ ກວມເອົາ 7.1%; ມີຜູ້ສະໝັກໃໝ່ 11 ທ່ານ ຍິງ 4 ທ່ານ ແລະ ຜູ້ເກົ່າສືບຕໍ່ສະໝັກ 3 ທ່ານ ຍິງ 1 ທ່ານ.

ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງທຸລະຄົມ ມີຈຳນວນ 7 ທ່ານ ຍິງ 1 ທ່ານ, ໃນນັ້ນ, ເລືອກເອົາ 5 ທ່ານ; ຜູ້ສະໝັກຮັບເລືອກຕັ້ງເປັນ ສສຂ ປະຈຳເຂດເລືອກຕັ້ງເມືອງແກ້ວອຸດົມ ມີຈຳນວນ 7 ທ່ານ ຍິງ 1 ທ່ານ, ໃນນັ້ນ, ເລືອກເອົາ 5 ທ່ານ. ເມືອງທຸລະຄົມມີ 65 ໜ່ວຍປ່ອນບັດເລືອກຕັ້ງ, ຜູ້ມີສິດປ່ອນບັດເລືອກຕັ້ງ 35,153 ຄົນ ຍິງ 16,623 ຄົນ; ເມືອງແກ້ວອຸດົມ ມີ 33 ໜ່ວຍປ່ອນບັດເລືອກຕັ້ງ, ໜ່ວຍເຄື່ອນທີ 1 ໜ່ວຍ ແລະ ຖົງເຄື່ອນທີ່ 5 ຖົງ, ຜູ້ມີສິດປ່ອນບັດເລືອກຕັ້ງ 12,891 ຄົນ ຍິງ 6,130 ຄົນ.

**(ນາງ ສຸພາວັນ ທອມສະນິດ)**

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສິສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ